**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ

ກອງເລຂາ

ເລກທີ 170...../ຄຕມຊ.ກລຂ

ນະຄອນຫຼວງວຽງຈັນ, ວັນທີ 19...06...2026.........

# ບົດສະຫຼຸບ

## ການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ປະຈຳປີ 2025 ຂອງ ສປປ ລາວ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 245/ນຍ, ລົງວັນທີ 03 ກໍລະກົດ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຕ້ານການຄ້າມະນຸດ;
- ອີງຕາມ ແຜນງານແຫ່ງຊາດວ່າດ້ວຍການສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໄລຍະ III ແຕ່ປີ 2021-2025 ສະບັບເລກທີ 027/ຄຕມຊ, ລົງວັນທີ 31 ສິງຫາ 2021;
- ອີງຕາມ ແຜນການເຄື່ອນໄຫວວຽກງານຕົວຈິງ ຂອງກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ.

## ພາກທີ I

## ຕີລາຄາສະພາບການ ແລະ ການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ປີ 2025

### I. ຕີລາຄາສະພາບການຄ້າມະນຸດ

**1. ສະພາບການຄ້າມະນຸດຂອງໂລກ ແລະ ພາກພື້ນ** ບັນຫາການຄ້າມະນຸດ ຖືເປັນອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງຢ່າງເປັນລະບົບ ແລະ ຮ້າຍແຮງ ເຊິ່ງຍັງສືບຕໍ່ເກີດຂຶ້ນໃນຫຼາຍຮູບແບບ, ຫຼາຍວິທີການ ແລະ ມີລັກສະນະເປັນເຄືອຂ່າຍທີ່ຊັບຊ້ອນຊຶ່ງທ່າອ່ຽງ ແລະ ຮູບແບບຂອງການຄ້າມະນຸດໃນໂລກປັດຈຸບັນ ແມ່ນ:

- **ການບັງຄັບໃຊ້ແຮງງານ (ກວມເອົາ 42%):** ຜູ້ເຄາະຮ້າຍຖືກບັງຄັບໃຫ້ເຮັດວຽກໃນຂະແໜງການຕ່າງໆ ເຊັ່ນ: ກະສິກຳ, ການກໍ່ສ້າງ, ການປະມົງ, ໂຮງງານອຸດສາຫະກຳ ແລະ ການຮັບໃຊ້ໃນຄົວເຮືອນ ໂດຍໄດ້ຮັບຄ່າຈ້າງໜ້ອຍທີ່ສຸດ ຫຼື ບໍ່ໄດ້ຮັບຄ່າຈ້າງເລີຍ.

- **ການສະແຫວງຫາຜົນປະໂຫຍດທາງເພດ (ກວມເອົາ 36%):** ສ່ວນໃຫຍ່ແມ່ນສິ່ງຜົນກະທົບຕໍ່ແມ່ຍິງ ແລະ ເດັກຍິງ, ໂດຍມັກຈະແອບແຝງຢູ່ໃນຮູບແບບການບໍລິການນວດ, ໂຮງແຮມ ຫຼື ຜ່ານແພລັດຟອມອອນລາຍຕ່າງໆ.

- ***ການບັງຄັບໃຫ້ກະທຳຜິດກົດໝາຍ (ເປັນທ່າອ່ຽງທີ່ພວມເພີ່ມຂຶ້ນ):*** *ຜູ້ເຄາະຮ້າຍຖືກບັງຄັບໃຫ້ມີສ່ວນຮ່ວມ* ໃນການກະທຳຜິດກົດໝາຍ ເຊັ່ນ: ການຄ້າຂາຍຢາເສບຕິດ, ການລັກຊັບ, ຫຼື ການຫຼອກລວງທາງອິນເຕີເນັດ (ເຊັ່ນ: ແກ໊ງຄໍເຊັນເຕີ / Cyber Scams).

- **ນອກນັ້ນ, ຍັງມີຮູບແບບອື່ນໆ:** ກວມເອົາການບັງຄັບໃຫ້ຂໍທານ (ເຊິ່ງເປົ້າໝາຍຫຼັກມັກຈະເປັນເດັກນ້ອຍ), ການລັກລອບຕັດເອົາອະໄວຍະວະມະນຸດໄປຂາຍ ແລະ ການເກນເດັກເຂົ້າເປັນທະຫານ.

**2. ສະພາບການຄ້າມະນຸດຢູ່ ສປປ ລາວ:** ສປປ ລາວ ຍັງສືບຕໍ່ປະເຊີນໜ້າກັບສິ່ງທ້າທາຍຫຼາຍດ້ານໃນວຽກງານການຕ້ານການຄ້າມະນຸດ, ເຊິ່ງກຸ່ມອາຊະຍາກໍາໄດ້ມີການເຄື່ອນໄຫວທີ່ເລິກແລັບ ແລະ ຊັບຊ້ອນຫຼາຍຂຶ້ນ. ບັນຫາທີ່ພົ້ນເດັ່ນໃນປີ 2025 ປະກອບມີ:

- **ການແຕ່ງດອງທີ່ມີລັກສະນະແອບແຝງ:** ຍັງປະກົດມີຫຼາຍກໍລະນີ ໂດຍກຸ່ມນາຍໜ້າທັງພາຍໃນ ແລະ ຕ່າງປະເທດ ໄດ້ສວຍໃຊ້ສື່ສັງຄົມອອນລາຍ ເພື່ອໂຄສະນາຫຼອກລວງແມ່ຍິງລາວ ໂດຍການສະເໜີຄ່າດອງສູງ ແລະ ສ້າງພາບມາຍາເຖິງການດໍາລົງຊີວິດທີ່ສະດວກສະບາຍ. ຫຼາຍກໍລະນີພົບວ່າມີການບັງຄັບ ແລະ ປອມແປງເອກະສານເພື່ອເພີ່ມອາຍຸໃຫ້ແກ່ເດັກຍິງທີ່ຍັງບໍ່ເຖິງກະສຽນອາຍຸແຕ່ງດອງ. *(ສະຖິຕິ: ໃນປີ 2025, ໄດ້ປະສານຂໍຄວາມຊ່ວຍເຫຼືອແມ່ຍິງລາວທີ່ຖືກຫຼອກລວງໄປແຕ່ງດອງຢູ່ ສປ ຈີນ ຈໍານວນ 60 ຄົນ (ເຊິ່ງສາມາດມອບ-ຮັບ ສົ່ງຕົວກັບຄືນປະເທດຢ່າງເປັນທາງການແລ້ວ 36 ຄົນ).*
- **ການຮັບຈ້າງຖືພາແທນ (ອຸ້ມບຸນ - Surrogacy):** ຖືເປັນອາຊະຍາກໍາຮູບແບບໃໝ່ທີ່ພົບເຫັນ ໂດຍກຸ່ມຄົນບໍ່ດີໄດ້ເປີດໂຮງໝໍ ຫຼື ຄລີນິກປິ່ນປົວພະຍາດແມ່ ແລະ ເດັກບັງໜ້າ ແຕ່ເບື້ອງຫຼັງແມ່ນການເຮັດປະສົມພັນທຽມ ໂດຍນໍາເອົາອະສຸຈິຈາກຕ່າງປະເທດມາປະສົມພັນ ແລ້ວສີດໃສ່ແມ່ຍິງລາວຜູ້ຮັບຈ້າງຖືພາ, ເມື່ອເກີດລູກແລ້ວກໍນໍາສົ່ງອອກຕ່າງປະເທດ. *(ຕົວຢ່າງ: ໃນວັນທີ 03 ເມສາ 2025, ເຈົ້າໜ້າທີ່ໄດ້ມ້າງກຸ່ມແກັ່ງອາຊະຍາກໍາດັ່ງກ່າວ ຢູ່ເຂດເສດຖະກິດພິເສດບໍ່ເຕັນ ແຂວງຫຼວງນໍ້າທາ ໂດຍກັກຕົວຜູ້ກ່ຽວຂ້ອງໄດ້ 26 ຄົນ, ໃນນັ້ນມີ ສັນຊາດຈີນ 3 ຄົນ, ມຽນມາ 2 ຄົນ ພ້ອມທັງຢຶດອຸປະກອນການແພດຈໍານວນຫຼາຍ).*
- **ການຂູດຮີດແຮງງານ ແລະ ການຄ້າປະເວນີ:** ມັກເກີດຂຶ້ນຢູ່ຕາມບັນດາເຂດເສດຖະກິດພິເສດ, ສວນກ້ວຍ, ສວນອ້ອຍ ແລະ ເຂດອຸດສາຫະກໍາຂະໜາດໃຫຍ່. ແຮງງານສ່ວນຫຼາຍຖືກຊັກຈູງຜ່ານສື່ອອນລາຍ, ເມື່ອເຮັດວຽກບໍ່ໄດ້ຕາມເປົ້າໝາຍກໍານົດ ກໍຈະຖືກບັງຄັບ, ຈໍາກັດອິດສະຫຼະພາບ ແລະ ບັງຄັບໃຫ້ເຮັດວຽກລ່ວງເວລາ. *(ຕົວຢ່າງ: ໃນວັນທີ 05 ກໍລະກົດ 2025, ເຈົ້າໜ້າທີ່ໄດ້ເຂົ້າຊ່ວຍເຫຼືອແຮງງານຊາວຫວຽດນາມ 44 ຄົນ ຢູ່ເຂດເສດຖະກິດພິເສດສາມລ່ຽມຄໍາ ທີ່ຕົກເປັນກຸ່ມສ່ຽງ ແລະ ໄດ້ມອບສົ່ງໃຫ້ເຈົ້າໜ້າທີ່ຕໍາຫຼວດຫວຽດນາມຢ່າງເປັນທາງການ. ນອກຈາກນີ້, ຍັງມີການຊັກຈູງຍິງສາວ ແລະ ເດັກນ້ອຍ ໄປຂາຍບໍລິການທາງເພດຕາມສະຖານບັນເທີງຕ່າງໆ).*

**II. ການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ໃນໄລຍະ 01 ປີຜ່ານມາ**

**1. ດ້ານດີ ແລະ ຜົນງານທີ່ຍາດມາໄດ້**

**1.1. ດ້ານວຽກງານນະໂຍບາຍ ແລະ ນິຕິກໍາ** ບັນດາຂະແໜງການທີ່ຮັບຜິດຊອບວຽກງານຕ້ານການຄ້າມະນຸດ ໄດ້ຄົ້ນຄວ້າທິດທາງແຜນການ ແລະ ກໍານົດນະໂຍບາຍ ເພື່ອສະກັດກັ້ນ ແລະ ຕ້ານການຄ້າມະນຸດ ຜ່ານກົນໄກຕ່າງໆ ຄື:

**ກ. ການຈັດຕັ້ງປະຕິບັດຂັ້ນສູນກາງ:**

- ສໍາເລັດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ປະຈໍາ 6 ເດືອນຕົ້ນປີ ແລະ ປະຈໍາປີ 2024 ລວມເຖິງທິດທາງແຜນການ 6 ເດືອນຕົ້ນປີ ແລະ ປີ 2025 ຂອງຄະນະກໍາມະການຕ້ານການຄ້າມະນຸດລະດັບຊາດ ໃນວັນທີ 24 ມັງກອນ 2025 ທີ່ນະຄອນຫຼວງວຽງຈັນ (ມີຜູ້ເຂົ້າຮ່ວມ 164 ຄົນ, ຍິງ 20 ຄົນ).

- ສຳເລັດກອງປະຊຸມປຶກສາຫາລື ປະກອບຄຳເຫັນໃສ່ຮ່າງແຜນງານແຫ່ງຊາດ ວ່າດ້ວຍການຕ້ານການຄ້າມະນຸດ ໄລຍະ IV (ປີ 2026-2030) ໃນວັນທີ 01-02 ກໍລະກົດ 2025 ທີ່ແຂວງວຽງຈັນ (ມີຜູ້ເຂົ້າຮ່ວມ 47 ຄົນ, ຍິງ 13 ຄົນ).

- ສຳເລັດການຈັດຝຶກອົບຮົມຄູຝຶກຂັ້ນສູນກາງ ກ່ຽວກັບວຽກງານຊ່ວຍເຫຼືອທາງດ້ານກົດໝາຍ ໃນວັນທີ 28 ສິງຫາ ຫາ 01 ກັນຍາ 2025 ທີ່ນະຄອນຫຼວງວຽງຈັນ (ມີຜູ້ເຂົ້າຮ່ວມ 30 ຄົນ, ຍິງ 14 ຄົນ).

- ສຳເລັດການລົງຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດ ວຽກງານການຊ່ວຍເຫຼືອທາງດ້ານກົດໝາຍ ຢູ່ 04 ເມືອງ ຂອງນະຄອນຫຼວງວຽງຈັນ ໃນວັນທີ 06-14 ສິງຫາ 2025 (ມີຜູ້ເຂົ້າຮ່ວມ 42 ຄົນ, ຍິງ 14 ຄົນ).

- ສຳເລັດກອງປະຊຸມປຶກສາຫາລື ກ່ຽວກັບສູນຮັບຕ້ອນຊົ່ວຄາວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດພາກເໜືອ ໃນວັນທີ 25 ກັນຍາ 2025 ທີ່ຫ້ອງວ່າການແຂວງຫຼວງນ້ຳທາ (ມີຜູ້ເຂົ້າຮ່ວມ 26 ຄົນ, ຍິງ 13 ຄົນ).

- ຈັດກອງປະຊຸມຄົ້ນຄວ້າເພື່ອປັບປຸງ "ດຳລັດວ່າດ້ວຍການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ" ຮ່ວມກັບຄະນະຮັບຜິດຊອບ ຈຳນວນ 04 ຄັ້ງ (ມີຜູ້ເຂົ້າຮ່ວມ 91 ຄົນ, ຍິງ 49 ຄົນ).

- ຈັດກອງປະຊຸມຄົ້ນຄວ້າເພື່ອປັບປຸງ "ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງວິສາຫະກິດບໍລິການຈັດຫາງານ" ຮ່ວມກັບຄະນະຮັບຜິດຊອບ ຈຳນວນ 07 ຄັ້ງ ທີ່ນະຄອນຫຼວງວຽງຈັນ (ມີຜູ້ເຂົ້າຮ່ວມ 144 ຄົນ, ຍິງ 70 ຄົນ).

- ສຳເລັດການລົງຕິດຕາມຊຸກຍູ້ວຽກງານປ້ອງກັນ ແລະ ແກ້ໄຂການກະທຳຜິດຂອງເດັກ ໂດຍບໍ່ສົ່ງໃຫ້ສານຕັດສິນ ໃນວັນທີ 28-29 ເມສາ 2025 ທີ່ແຂວງຊຽງຂວາງ (ມີຜູ້ເຂົ້າຮ່ວມ 37 ຄົນ, ຍິງ 09 ຄົນ).

- ໄດ້ນຳສົ່ງບົດສະຫຼຸບ ແລະ ຕອບຄຳຖາມການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ປະຈຳປີ 2024 ຂອງ ສປປ ລາວ ໃຫ້ແກ່ສະຖານເອກອັກຄະລັດຖະທູດສະຫະລັດອາເມຣິກາ ປະຈຳ ສປປ ລາວ ເພື່ອເປັນຂໍ້ມູນປະກອບເຂົ້າໃນບົດລາຍງານຜົນຂອງການຈັດອັນດັບວຽກງານຕ້ານການຄ້າມະນຸດ (TIP Report) ປີ 2025 ເຊິ່ງໃນປີ 2025 ສປປ ລາວ ຖືກຈັດຢູ່ໃນອັນດັບທີ 3 (Tier 3).

**ຂ. ການຈັດຕັ້ງປະຕິບັດຂັ້ນທ້ອງຖິ່ນ:**

- ສຳເລັດການສ້າງແຜນງານແຫ່ງຊາດ ວ່າດ້ວຍການສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໄລຍະ III (ປະຈຳປີ 2025) ແລະ ສຳເລັດການສ້າງແຜນງານແຫ່ງຊາດ 5 ປີ ໄລຍະ I (ແຕ່ປີ 2026-2030) ຂອງແຂວງເຊກອງ ແລະ ແຂວງຫົວພັນ.

- ສຳເລັດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ປະຈຳປີ 2024 ແລະ ທິດທາງແຜນການປີ 2025 ຂອງຄະນະກຳມະການຕ້ານການຄ້າມະນຸດຂັ້ນແຂວງ ຈຳນວນ 06 ຄັ້ງ ຄື: ນະຄອນຫຼວງວຽງຈັນ, ແຂວງຫຼວງນ້ຳທາ, ເຊກອງ, ໄຊຍະບູລີ, ຄຳມ່ວນ ແລະ ຈຳປາສັກ (ມີຜູ້ເຂົ້າຮ່ວມທັງໝົດ 290 ຄົນ, ຍິງ 75 ຄົນ).

- ຕ້ອນຮັບການຢ້ຽມຢາມ ແລະ ເຮັດວຽກຂອງຄະນະນຳຂັ້ນສູນກາງ, ຂັ້ນແຂວງ ແລະ ຄະນະຮັບຜິດຊອບການກໍ່ສ້າງສູນ ຢູ່ສູນຮັບຕ້ອນຊົ່ວຄາວພາກເໜືອ ແຂວງຫຼວງນ້ຳທາ ຈຳນວນ 06 ຄັ້ງ (ມີຜູ້ເຂົ້າຮ່ວມ 91 ຄົນ, ຍິງ 65 ຄົນ).

- ສົມທົບກັບຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ 03 ເມືອງ ເພື່ອລົງຊຸກຍູ້ສ້າງຄວາມເຂັ້ມແຂງ ໃຫ້ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນບ້ານ ທັງໝົດ 12 ບ້ານ (ມີຜູ້ເຂົ້າຮ່ວມ 96 ຄົນ, ຍິງ 12 ຄົນ).
- ສຳເລັດການລົງຊຸກຍູ້ກວດກາການຈັດຕັ້ງເຄື່ອນໄຫວວຽກງານຕ້ານການຄ້າມະນຸດ ຂອງຄະນະກຳມະການຂັ້ນແຂວງຫຼວງພະບາງ ຢູ່ 04 ເມືອງ ຄື: ເມືອງຊຽງເງິນ, ເມືອງນານ, ເມືອງພູຄູນ ແລະ ເມືອງນ້ຳບາກ (ມີຜູ້ເຂົ້າຮ່ວມ 226 ຄົນ, ຍິງ 39 ຄົນ).

**1.2. ດ້ານວຽກງານການປ້ອງກັນ**

**1.2.1 ການສ້າງຄວາມເຂັ້ມແຂງ** ບັນດາຂະແໜງການທີ່ຮັບຜິດຊອບວຽກງານຕ້ານການຄ້າມະນຸດ ໄດ້ສຸມໃສ່ປະຕິບັດວຽກງານການປ້ອງກັນ ແລະ ສ້າງຄວາມເຂັ້ມແຂງດ້ວຍຫຼາຍຮູບແບບ ເຊິ່ງສະແດງອອກດັ່ງນີ້:

**ກ. ການຈັດຕັ້ງປະຕິບັດຂັ້ນສູນກາງ:**

- ຈັດກອງປະຊຸມປຶກສາຫາລື ກ່ຽວກັບການຄຸ້ມຄອງສູນຮັບຕ້ອນຊົ່ວຄາວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດພາກເໜືອ ຮ່ວມກັບຄະນະນຳສູນກາງສະຫະພັນແມ່ຍິງລາວ ໃນວັນທີ 24 ກໍລະກົດ 2025 ທີ່ນະຄອນຫຼວງວຽງຈັນ (ມີຜູ້ເຂົ້າຮ່ວມ 20 ຄົນ, ເປັນຍິງທັງໝົດ).
- ຈັດຝຶກອົບຮົມສ້າງຄູຝຶກ ກ່ຽວກັບການນຳໃຊ້ "ຄູ່ມືໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ" (ສະບັບປັບປຸງ) ໃຫ້ແກ່ 05 ແຂວງເປົ້າໝາຍ ໃນວັນທີ 27-30 ມັງກອນ 2025 ທີ່ແຂວງວຽງຈັນ (ມີຜູ້ເຂົ້າຮ່ວມ 39 ຄົນ, ຍິງ 31 ຄົນ).
- ຈັດກອງປະຊຸມຜ່ານຮ່າງ "ຄູ່ມືມາດຖານຕໍ່າສຸດຂອງສູນຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ" ໃນວັນທີ 04 ກັນຍາ 2025 ທີ່ນະຄອນຫຼວງວຽງຈັນ (ມີຜູ້ເຂົ້າຮ່ວມ 20 ຄົນ, ຍິງ 17 ຄົນ).
- ຈັດກອງປະຊຸມປຶກສາຫາລືເພື່ອສ້າງ "ຄູ່ມືເຂົ້າເຖິງການຊົດເຊີຍຄ່າເສຍຫາຍຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍຜ່ານຂະບວນການຊ່ວຍເຫຼືອດ້ານກົດໝາຍ" ໃນວັນທີ 02-03 ຕຸລາ 2025 ທີ່ນະຄອນຫຼວງວຽງຈັນ (ມີຜູ້ເຂົ້າຮ່ວມ 23 ຄົນ, ຍິງ 15 ຄົນ).
- ຈັດກອງປະຊຸມແລກປ່ຽນບົດຮຽນ ກ່ຽວກັບການຄຸ້ມຄອງກໍລະນີການຄ້າມະນຸດ ແລະ ກົນໄກການສົ່ງຕໍ່ຜູ້ຖືກເຄາະຮ້າຍ (ໂດຍສະເພາະການຄ້າມະນຸດເພື່ອບັງຄັບໃຫ້ກະທຳຜິດທາງອາຍາ) ລະຫວ່າງໜ່ວຍງານຊ່ວຍເຫຼືອປົກປ້ອງ ແລະ ໜ່ວຍງານບັງຄັບໃຊ້ກົດໝາຍ ໃນວັນທີ 22-23 ກັນຍາ 2025 ທີ່ນະຄອນຫຼວງວຽງຈັນ (ມີຜູ້ເຂົ້າຮ່ວມ 55 ຄົນ, ຍິງ 33 ຄົນ).
- ຈັດກອງປະຊຸມປຶກສາຫາລື ກ່ຽວກັບການຊ່ວຍເຫຼືອດ້ານກົດໝາຍ ແລະ ການປະຕິບັດຄຳຕັດສິນຂອງສານໃນຄະດີຄ້າມະນຸດ ໃນວັນທີ 21-23 ພຶດສະພາ 2025 (ມີຜູ້ເຂົ້າຮ່ວມ 41 ຄົນ, ຍິງ 26 ຄົນ).
- ຈັດກອງປະຊຸມປຶກສາຫາລື ກ່ຽວກັບການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ຮ່ວມກັບສະມາຄົມທຸລະກິດບໍລິການຈັດຫາງານລາວ ໃນວັນທີ 24 ກໍລະກົດ 2025 ທີ່ນະຄອນຫຼວງວຽງຈັນ (ມີຜູ້ເຂົ້າຮ່ວມ 86 ຄົນ, ຍິງ 34 ຄົນ).

- ຈັດກອງປະຊຸມ ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ນິຕິກຳພາຍໃນທີ່ກ່ຽວຂ້ອງກັບວຽກງານຕ້ານການຄ້າມະນຸດ ສຳລັບພະນັກງານກະຊວງການຕ່າງປະເທດ, ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ບາງກະຊວງທີ່ກ່ຽວຂ້ອງ ທີ່ກຽມໄປປະຈຳການຢູ່ສຳນັກງານຜູ້ຕາງໜ້າແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ໃນວັນທີ 22-24 ມັງກອນ 2025 ທີ່ນະຄອນຫຼວງວຽງຈັນ (ມີຜູ້ເຂົ້າຮ່ວມ 100 ຄົນ, ຍິງ 43 ຄົນ).
- ຈັດຝຶກອົບຮົມໃຫ້ພະນັກງານຮັບຜິດຊອບຂັ້ນເມືອງ ແລະ 05 ບ້ານເປົ້າໝາຍໃໝ່ ຂອງໂຄງການທົດລອງກ່ຽວກັບວຽກງານປົກປ້ອງຊ່ວຍເຫຼືອເດັກ ແລະ ການປ້ອງກັນ-ແກ້ໄຂການກະທຳຜິດຂອງເດັກໂດຍບໍ່ສົ່ງໃຫ້ສານຕັດສິນ ທີ່ແຂວງຊຽງຂວາງ ໃນວັນທີ 16-18 ມິຖຸນາ 2025 (ມີຜູ້ເຂົ້າຮ່ວມ 62 ຄົນ, ຍິງ 35 ຄົນ).
- ນຳສົ່ງປຶ້ມ "ປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ" (ສະບັບປັບປຸງ) ຈຳນວນ 15.660 ຫົວ ແລະ ປຶ້ມ "ຄູ່ມືໄກ່ເກ່ຍການກະທຳຜິດຂອງເດັກຂັ້ນບ້ານ" 3.600 ຫົວ ມອບໃຫ້ພະແນກຍຸຕິທຳທົ່ວປະເທດ.
- ຈັດຝຶກອົບຮົມວຽກງານການໄກ່ເກ່ຍການກະທຳຜິດຂອງເດັກຂັ້ນບ້ານ ແລະ ເຜີຍແຜ່ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຈຳນວນ 03 ຄັ້ງ (ວັນທີ 18 ກໍລະກົດ 2025 ທີ່ແຂວງວຽງຈັນ, ວັນທີ 11-13 ສິງຫາ 2025 ທີ່ແຂວງບໍລິຄຳໄຊ ແລະ ວັນທີ 2-4 ກັນຍາ 2025 ທີ່ແຂວງຄຳມ່ວນ), ມີຜູ້ເຂົ້າຮ່ວມ 95 ຄົນ, ຍິງ 33 ຄົນ.
- ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງວຽກງານຊ່ວຍເຫຼືອທາງດ້ານກົດໝາຍ ໃນຫົວຂໍ້: ວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ວຽກງານຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ-ເດັກນ້ອຍ, ວຽກງານຄວາມສະເໝີພາບຍິງ-ຊາຍ ແລະ ວຽກງານຊ່ວຍເຫຼືອທາງດ້ານກົດໝາຍ ໃຫ້ພະນັກງານຜູ້ຮັບຜິດຊອບ ຂັ້ນແຂວງ ແລະ ຂັ້ນເມືອງ ຂອງແຂວງຫຼວງນ້ຳທາ, ບໍ່ແກ້ວ, ວຽງຈັນ ແລະ ບໍລິຄຳໄຊ ໃນວັນທີ 29-31 ກໍລະກົດ 2025 (ມີຜູ້ເຂົ້າຮ່ວມ 97 ຄົນ, ຍິງ 45 ຄົນ).
- ຈັດຝຶກອົບຮົມໃຫ້ພະນັກງານຂອງບັນດາວິສາຫະກິດບໍລິການຈັດຫາງານ ກ່ຽວກັບການນຳໃຊ້ລະບົບຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ໂດຍການຊຳລະຄ່າທຳນຽມ ແລະ ຄ່າບໍລິການຜ່ານລະບົບທະນາຄານ ໃນວັນທີ 18 ມີນາ 2025 ທີ່ນະຄອນຫຼວງວຽງຈັນ (ມີຜູ້ເຂົ້າຮ່ວມ 91 ຄົນ, ຍິງ 37 ຄົນ).
- ສຳເລັດກອງປະຊຸມເຜີຍແຜ່ນິຕິກຳ ກ່ຽວກັບການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ແລະ ຝຶກອົບຮົມປຶ້ມ "ຄູ່ມືຝຶກອົບຮົມກ່ອນການຈັດສົ່ງ" (Pre-departure) ທີ່ແຂວງຄຳມ່ວນ, ສະຫວັນນະເຂດ ແລະ ສາລະວັນ ໃນລະຫວ່າງວັນທີ 14-18 ກໍລະກົດ 2025 (ມີຜູ້ເຂົ້າຮ່ວມ 122 ຄົນ, ຍິງ 48 ຄົນ).
- ລົງເຜີຍແຜ່ "ຄູ່ມືການເຄື່ອນຍ້າຍໄປຕ່າງປະເທດແບບຖືກຕ້ອງ ແລະ ປອດໄພ" ຈຳນວນ 03 ຄັ້ງ (ມີຄູ-ອາຈານ ແລະ ນັກສຶກສາເຂົ້າຮ່ວມ 466 ຄົນ, ຍິງ 205 ຄົນ).
- ຈັດກອງປະຊຸມສຳມະນາສ້າງຄວາມເຂັ້ມແຂງວຽກງານຕ້ານການຄ້າມະນຸດ ໃຫ້ແກ່ນາຍ ແລະ ພົນທະຫານຢູ່ກອງທັບປະຊາຊົນລາວ ທີ່ກອງບັນຊາການທະຫານແຂວງຫົວພັນ ໃນວັນທີ 13-17 ຕຸລາ 2025 (ມີຜູ້ເຂົ້າຮ່ວມ 111 ຄົນ, ຍິງ 21 ຄົນ).

- ຈັດຝຶກອົບຮົມວຽກງານຕ້ານການຄ້າມະນຸດໄລຍະສັ້ນ ໃຫ້ນາຍ ແລະ ພົນຕໍາຫຼວດຄຸ້ມຄອງການທ່ອງທ່ຽວ ໃນວັນທີ 26-27 ພະຈິກ 2025 ທີ່ແຂວງວຽງຈັນ (ມີຜູ້ເຂົ້າຮ່ວມ 50 ຄົນ, ຍິງ 07 ຄົນ).

**ຂ. ການຈັດຕັ້ງປະຕິບັດຂັ້ນທ້ອງຖິ່ນ:**

- ເຂົ້າຮ່ວມເປັນຄູຝຶກ ຈໍານວນ 05 ຄັ້ງ ໃຫ້ແຮງງານລາວກ່ອນຈັດສົ່ງໄປເຮັດວຽກຢູ່ປະເທດໄທ (ມີຜູ້ເຂົ້າຮ່ວມ 475 ຄົນ, ຍິງ 211 ຄົນ).
- ລົງໃຫ້ຄວາມຮູ້ກ່ຽວກັບກົດໝາຍຂັ້ນພື້ນຖານ ຕໍ່ເດັກນ້ອຍ ແລະ ແມ່ຍິງທີ່ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ການຂູດຮີດທາງເພດ ທີ່ພັກເຊົາຢູ່ສູນຫຼັກ 09 ແຂວງສະຫວັນນະເຂດ ຈໍານວນ 05 ຄັ້ງ (ມີຜູ້ເຂົ້າຮ່ວມ 40 ຄົນ, ຍິງ 25 ຄົນ).
- ຈັດກອງປະຊຸມແລກປ່ຽນບົດຮຽນດ້ານວິຊາການ ກ່ຽວກັບວຽກງານຕ້ານການຄ້າມະນຸດ ໃຫ້ແກ່ພະນັກງານ ໄອຍະການ ແລະ ອົງການໄອຍະການປະຊາຊົນແຂວງ ຈໍານວນ 01 ຄັ້ງ (ມີຜູ້ເຂົ້າຮ່ວມ 22 ຄົນ, ຍິງ 10 ຄົນ).
- ຈັດຝຶກອົບຮົມວຽກງານຕາໜ່າງປົກປ້ອງເດັກ ໃຫ້ຄະນະກໍາມະການປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນເມືອງ ແລະ ຂັ້ນບ້ານ ໃນຂອບເຂດ 02 ເມືອງ (ກວມເອົາ 10 ບ້ານ), ມີຜູ້ເຂົ້າຮ່ວມ 110 ຄົນ, ຍິງ 56 ຄົນ.
- ຈັດກອງປະຊຸມຄະນະກໍາມະການ 3 ຝ່າຍບອກ ເພື່ອປຶກສາຫາລືກ່ຽວກັບວິທີການໂຄສະນາ ເພື່ອການປົກປ້ອງແຮງງານລາວເຄື່ອນຍ້າຍໄປອອກແຮງງານຢູ່ຕ່າງປະເທດ ຈໍານວນ 01 ຄັ້ງ ໃນຂອບເຂດ 02 ເມືອງ (ມີຜູ້ເຂົ້າຮ່ວມ 22 ຄົນ, ຍິງ 03 ຄົນ).

**1.2.2. ການໂຄສະນາປຸກຈິດສໍານຶກ ແລະ ການເຜີຍແຜ່ຜ່ານສື່ຕ່າງໆ ແລະ ສະຖານທີ່ຕ່າງໆ**

**ກ. ການຈັດຕັ້ງປະຕິບັດຂັ້ນສູນກາງ:** ຄະນະກໍາມະການຂັ້ນສູນກາງ ໄດ້ສຸມໃສ່ວຽກງານໂຄສະນາເຜີຍແຜ່ຜົນຮ້າຍຂອງການຄ້າມະນຸດ, ກົດໝາຍ ແລະ ນິຕິກໍາຕ່າງໆ ຈໍານວນ 11 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 2.903 ຄົນ (ຍິງ 2.310 ຄົນ). ການຈັດຕັ້ງປະຕິບັດດັ່ງກ່າວ ສາມາດແບ່ງອອກເປັນແຕ່ລະໜ້າວຽກດັ່ງນີ້:

- **ຜ່ານສື່ໂທລະພາບ ແລະ ວິທະຍຸກະຈາຍສຽງ:**
  - **ໂທລະພາບ ແລະ ວິທະຍຸ ປກສ:** ຜະລິດຂ່າວອອກອາກາດໃນລາຍການ "ປະຊາຮ່ວມໃຈຕ້ານໄພການຄ້າມະນຸດ" ທາງໂທລະພາບ ປກສ (ທຸກວັນເສົາ-ອາທິດ ເວລາ 10:00-10:30 ໂມງ) ຈໍານວນ 162 ຄັ້ງ; ຜະລິດລາຍການວິທະຍຸ ປກສ (FM 101.5 MHz) ອອກອາກາດທຸກວັນເສົາ-ອາທິດ (ເວລາ 07:30-08:30 ໂມງ) ຈໍານວນ 112 ຄັ້ງ ແລະ ອອກອາກາດທາງວິທະຍຸກອງທັບ ຈໍານວນ 432 ຄັ້ງ.
  - **ວິທະຍຸກະຈາຍສຽງແຫ່ງຊາດລາວ:** ໂຄສະນາເຜີຍແຜ່ກົດໝາຍ, ນິຕິກໍາໃຕ້ກົດໝາຍ ແລະ ສະປອດໂຄສະນາ ຜ່ານລາຍການຄວາມຮູ້ທາງດ້ານກົດໝາຍ ໂດຍແບ່ງເປັນ: ພາກພາສາລາວ (FM 103.7 MHz) ອອກອາກາດທຸກວັນຈັນ, ພຸດ ແລະ ສຸກ (ເວລາ 14:30-15:00 ໂມງ) ຈໍານວນ 144 ຄັ້ງ; ພາກພາສາມົ້ງ (AM 92.0 MHz) ທຸກວັນເສົາ ຈໍານວນ 76 ຄັ້ງ; ແລະ ພາກພາສາກຶມມຸ (AM 560 MHz) ທຸກວັນເສົາ ຈໍານວນ 52 ຄັ້ງ.

- ວິທະຍຸກະຈາຍສຽງກອງທັບປະຊາຊົນລາວ (FM 99.7 MHz): ຈັດລາຍການ "ປະຊາຮ່ວມໃຈຕ້ານໄພຄ້າມະນຸດ" (ທຸກວັນຈັນ-ອາທິດ ເວລາ 20:00-20:30 ໂມງ) ແລະ ລາຍການພິເສດ (ວັນເສົາ-ອາທິດ ເວລາ 10:00-10:30 ໂມງ) ເຊິ່ງໄດ້ອອກອາກາດລວມ 642 ລາຍການ. ພ້ອມນັ້ນ, ໄດ້ເປີດສະປອດໂຄສະນາ 1.203 ຄັ້ງ, ເປີດເພງຕ້ານການຄ້າມະນຸດ 642 ຄັ້ງ ແລະ ລາຍງານຂ່າວ 178 ຂ່າວ (ລວມເວລາ 222 ຊົ່ວໂມງ).
- ຄື້ນວິທະຍຸສົນໄຊ (FM 90.00 MHz): ຈັດກິດຈະກໍາອອກແຮງງານລວມ ແລະ ຖາມ-ຕອບ ສໍາລັບຊາວໜຸ່ມ-ເຍົາວະຊົນ ເນື່ອງໃນວັນຕ້ານການຄ້າມະນຸດ ມີຜູ້ເຂົ້າຮ່ວມ 50 ຄົນ (ຍິງ 15 ຄົນ).

- **ຜ່ານສື່ສັງຄົມອອນລາຍ (Social Media) ແລະ ເວັບໄຊ:**
  - ໄດ້ນໍາເອົາຂໍ້ມູນການເຄື່ອນໄຫວ, ວິດີໂອໂຄສະນາສັ້ນ, ລະຄອນ ແລະ ນິຕິກໍາກ່ຽວຂ້ອງ ເຜີຍແຜ່ລົງໃນເວັບໄຊທາງການຂອງ ຄຕມຊ (laosncatip.gov.la). ປັດຈຸບັນ, ມີຜູ້ຕິດຕາມຜ່ານ Facebook: 3.712 ຄົນ, ຊ່ອງ YouTube: 795 ຄົນ ແລະ TikTok: 2.254 ຄົນ ເຊິ່ງໄດ້ຮັບຄວາມສົນໃຈຈາກສັງຄົມຢ່າງກວ້າງຂວາງ ໂດຍມີຍອດເຂົ້າຊົມລວມທັງໝົດ 38.200 ຄັ້ງ.
  - ຈັດກິດຈະກໍາຖ່າຍທອດສົດ (Live) ຜ່ານໜ້າ Facebook ຂອງສູນໃຫ້ຄໍາປຶກສາ ເນື່ອງໃນວັນສາກົນຕ້ານການຄ້າມະນຸດ (ວັນທີ 30 ກໍລະກົດ) ເຊິ່ງຈັດຂຶ້ນໃນວັນທີ 08 ສິງຫາ 2025. ມີຜູ້ເຂົ້າຮ່ວມກິດຈະກໍາສົດ 32 ຄົນ (ແຈກລາງວັນ 10 ລາງວັນ) ແລະ ມຍອດການເຂົ້າຊົມ (Live ແລະ ຍ້ອນຫຼັງ) ລວມທັງໝົດ 3.804 ຄັ້ງ.

- **ການສ້າງສື່ໂຄສະນາ ແລະ ສິ່ງພິມຕ່າງໆ:**
  - ສໍາເລັດການສ້າງສະປອດໂຄສະນາ 04 ເລື່ອງ ຄື: "ສຽງເຕືອນທີ່ຄວນຟັງ", "ວຽກໃນຝັນ", "ຍ້ອນຄວາມລໍາບາກຈຶ່ງຖືກຕົວະ" ແລະ "ເຕືອນສະຕິກ່ອນແຕ່ງດອງ".
  - ສໍາເລັດການສ້າງສະປອດໂຄສະນາ ເພື່ອສົ່ງເສີມ (Promote) ວັນສາກົນຕ້ານການຄ້າມະນຸດ ປະຈໍາປີ 2025.
  - ສ້າງ ແລະ ຈັດພິມປື້ມຄູ່ມືວຽກງານໄກ່ເກ່ຍການກະທໍາຜິດຂອງເດັກ ຈໍານວນ 4.000 ຫົວ ແລະ ປະຕິທິນຕ້ານການຄ້າມະນຸດ ປະຈໍາປີ 2025 ຈໍານວນ 400 ຫົວ.
  - ສ້າງລະຄອນສັ້ນ ເລື່ອງ: "ຜ້າສີຂາວ" ທີ່ສ່ອງແສງໃຫ້ເຫັນເຖິງການຫ້າມລົງໂທດດ້ວຍການຂ້ຽນຕີເດັກ.

- **ການຈັດສໍາມະນາ ແລະ ລົງພື້ນທີ່ຕົວຈິງ:**
  - ສໍາເລັດການຈັດງານສໍາມະນາ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 70 ປີ ໃນຫົວຂໍ້: "ການປົກປ້ອງແມ່ຍິງ ແລະ ໄວໜຸ່ມ" ໃນວັນທີ 12 ກໍລະກົດ 2025 ທີ່ນະຄອນຫຼວງວຽງຈັນ, ມີຜູ້ເຂົ້າຮ່ວມ 438 ຄົນ (ຍິງ 376 ຄົນ).

- ລົງເຜີຍແຜ່ຜົນຮ້າຍຂອງການຄ້າມະນຸດ ໃຫ້ແກ່ຊາວໜຸ່ມ-ເຍົາວະຊົນ ທີ່ໝູ່ບ້ານເດັກ SOS ແຂວງ ຫຼວງພະບາງ (ວັນທີ 20-21 ກັນຍາ 2025), ມີຜູ້ເຂົ້າຮ່ວມ 54 ຄົນ (ຍິງ 20 ຄົນ).
- ເຂົ້າຮ່ວມ ແລະ ເປັນວິທະຍາກອນ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຈຳນວນ 21 ຄັ້ງ, ມີຜູ້ເຂົ້າ ຮ່ວມ 295 ຄົນ (ຍິງ 132 ຄົນ).

***ຂ. ການຈັດຕັ້ງປະຕິບັດຂັ້ນທ້ອງຖິ່ນ:*** ຄະນະກຳມະການຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ສຳເລັດການຈັດກິດຈະກຳ ໂຄສະນາປຸກຈິດສຳນຶກ ກ່ຽວກັບວຽກງານຕ້ານການຄ້າມະນຸດ ແລະ ເອກະສານກ່ຽວຂ້ອງ ລວມທັງໝົດ 983 ຄັ້ງ, ມີ ຜູ້ເຂົ້າຮ່ວມ 126.616 ຄົນ (ຍິງ 56.216 ຄົນ) ພ້ອມທັງແຈກຢາຍໂປສເຕີ ຈຳນວນ 300 ແຜ່ນ. ຜົນງານທີ່ພົ້ນເດັ່ນໃນ ແຕ່ລະແຂວງ ມີດັ່ງນີ້:

- **ແຂວງຄຳມ່ວນ:** ຈັດພິທີລະນຶກວັນສາກົນຕ້ານການຄ້າມະນຸດ (30 ກໍລະກົດ 2025) ໂດຍມີຜູ້ເຂົ້າຮ່ວມຫຼາຍ ກວ່າ 300 ຄົນ. ສຳເລັດການໂຄສະນາເຜີຍແຜ່ກົດໝາຍຜ່ານໂທລະພາບແຂວງ 909 ຄັ້ງ, ວິທະຍຸແຂວງ 1.242 ຄັ້ງ, ໂທລະໂຄ່ງເມືອງ/ບ້ານ 219 ຄັ້ງ, ຜ່ານໜັງສືພິມ 16 ຄັ້ງ ແລະ ຂຽນບົດລະຄອນສັ້ນລົງ Facebook 278 ຄັ້ງ. ນອກຈາກນີ້, ໄດ້ສົ່ງຂ່າວໃຫ້ສື່ສິ່ງພິມຂອງກະຊວງຍຸຕິທຳ 15 ຂ່າວ, ເປີດສະປອດ ໂຄສະນາຜ່ານລາຍການໄວໜຸ່ມ 45 ຄັ້ງ ແລະ ຜ່ານວິທະຍຸ/ໂທລະໂຄ່ງ 547 ຄັ້ງ.
- **ແຂວງໄຊສົມບູນ ແລະ ແຂວງເຊກອງ:** ສຳເລັດການຕິດຕັ້ງປ້າຍຄຳຂວັນ ຕ້ອນຮັບວັນສາກົນຕ້ານການຄ້າ ມະນຸດ ປະຈຳປີ 2025 ຈຳນວນ 06 ປ້າຍ (ຈັດຂຶ້ນ 03 ຄັ້ງ) ແລະ ໂຄສະນາຜ່ານຈໍ LED ຢູ່ປະຕູໂຂງທາງ ເຂົ້າ-ອອກ ຂອງແຂວງເຊກອງ ເປັນເວລາ 15 ວັນ.
- **ແຂວງວຽງຈັນ:** ສຳເລັດການຕິດຕັ້ງປ້າຍໂຄສະນາຕາມຊຸມຊົນ ຈຳນວນ 04 ຈຸດ ຄື: ເຂດຕະຫຼາດຫຼັກ 52 (ເມືອງໂພນໂຮງ), ເຂດຕະຫຼາດໂພນໝີ (ເມືອງວຽງຄຳ), ໜ້າກອງບັນຊາການ ປກສ ແຂວງວຽງຈັນ ແລະ ສົ້ນຂົວນ້ຳງື່ມ. ພ້ອມທັງໄດ້ເຜີຍແຜ່ວິດີໂອຜົນຮ້າຍຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ-ເດັກນ້ອຍ, ການຄ້າ ມະນຸດ ແລະ ການແຕ່ງງານກ່ອນໄວອັນຄວນ ໃຫ້ແກ່ເດັກອາຍຸຕ່ຳກວ່າ 18 ປີ ແລະ ສັງຄົມ ຈຳນວນ 02 ຄັ້ງ, ມີຜູ້ເຂົ້າຮ່ວມ 371 ຄົນ (ຍິງ 220 ຄົນ).
- **ແຂວງອັດຕະປື:** ລົງເຜີຍແຜ່ພາລະບົດບາດຂອງສູນໃຫ້ຄຳປຶກສາ-ປົກປ້ອງແມ່ຍິງ ແລະ ເດັກນ້ອຍ, ພ້ອມທັງ ໂຄສະນາສາຍດ່ວນຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຢູ່ 10 ບ້ານເປົ້າໝາຍ ໃນ 05 ຕົວເມືອງ. ໄດ້ຈັດກິດຈະກຳ ຖາມ-ຕອບ ແລະ ແລກປ່ຽນຄວາມຄິດເຫັນ ໂດຍມີຜູ້ເຂົ້າຮ່ວມທັງໝົດ 789 ຄົນ (ຍິງ 494 ຄົນ).

**1.3 ວຽກງານການດຳເນີນຄະດີ ແລະ ການບັງຄັບໃຊ້ກົດໝາຍ**

ບັນດາຂະແໜງການດຳເນີນຄະດີ ແລະ ການບັງຄັບໃຊ້ກົດໝາຍ ຕາມຂະບວນການຍຸຕິທຳ ໄດ້ເອົາໃຈໃສ່ສຸມ ໃສ່ການດຳເນີນ ແລະ ແກ້ໄຂຄະດີຄ້າມະນຸດ ຢ່າງເດັດຂາດ ແລະ ເຂັ້ມງວດ, ຊຶ່ງສະແດງອອກດັ່ງນີ້:

**1.3.1 ການຈັດຕັ້ງປະຕິບັດຂອງເຈົ້າໜ້າທີ່ຕຳຫຼວດ:**

- **ຄະດີຄ້າງມາແຕ່ປີ 2024:** ໄດ້ສືບຕໍ່ດຳເນີນມີທັງໝົດ 14 ເລື່ອງ, ມີຜູ້ຖືກຫາ 23 ຄົນ (ຍິງ 11 ຄົນ); ໃນນີ້ ມີ ຜູ້ຖືກຫາຊາວຕ່າງປະເທດ 11 ຄົນ (ຍິງ 04 ຄົນ). ມີຜູ້ຖືກເຄາະຮ້າຍທັງໝົດ 37 ຄົນ (ຍິງ 31 ຄົນ), ຊຶ່ງໃນ ນັ້ນອາຍຸຕ່ຳກວ່າ 18 ປີ ມີ 27 ຄົນ (ຍິງ 24 ຄົນ).

- **ຄະດີຮັບເຂົ້າໃໝ່ໃນປີ 2025:** ມີທັງໝົດ 45 ເລື່ອງ, ມີຜູ້ຖືກຫາ 119 ຄົນ (ຍິງ 75 ຄົນ); ໃນນີ້ ມີຜູ້ຖືກຫາ ຊາວຕ່າງປະເທດ 36 ຄົນ (ຍິງ 10 ຄົນ). ມີຜູ້ຖືກເຄາະຮ້າຍທັງໝົດ 86 ຄົນ (ຍິງ 80 ຄົນ), ຊຶ່ງໃນນັ້ນອາຍຸຕໍ່າ ກວ່າ 18 ປີ ມີ 71 ຄົນ (ຍິງ 66 ຄົນ).

- ຄະດີສົ່ງໃຫ້ອົງການໄອຍະການປະຊາຊົນ ຈຳນວນ 36 ເລື່ອງ, ມີຜູ້ຖືກຫາ 93 ຄົນ (ຍິງ 61 ຄົນ), ໃນນັ້ນເປັນ ຊາວຕ່າງປະເທດ 26 ຄົນ (ຍິງ 06 ຄົນ); ມີຜູ້ຖືກເຄາະຮ້າຍ 04 ຄົນ (ຍິງ 04 ຄົນ), ອາຍຸຕໍ່າກວ່າ 18 ປີ 03 ຄົນ (ຍິງ 03 ຄົນ). ນອກຈາກນີ້, ໄດ້ຊຸດມ້ຽນຄະດີ 02 ເລື່ອງ ແລະ ພວມດຳເນີນການສືບສວນ-ສອບສວນ 16 ເລື່ອງ.

**1.3.2 ການຈັດຕັ້ງປະຕິບັດຂອງອົງການໄອຍະການປະຊາຊົນ:** ໃນໄລຍະປີ 2025, ອົງການໄອຍະການປະຊາຊົນ ໄດ້ມີ ຄວາມຄືບໜ້າໃນການແກ້ໄຂຄະດີ ດັ່ງນີ້:

- **ຄະດີທີ່ແກ້ໄຂສຳເລັດ:** ໄດ້ດຳເນີນຄະດີສຳເລັດ ແລະ ສົ່ງຟ້ອງຂຶ້ນສານ ຈຳນວນ 24 ເລື່ອງ, ມີຜູ້ຖືກຫາທັງ ໝົດ 42 ຄົນ (ຍິງ 17 ຄົນ), ບໍ່ມີຜູ້ຖືກຫາຊາວຕ່າງປະເທດ. ມີຜູ້ຖືກເຄາະຮ້າຍທັງໝົດ 66 ຄົນ (ຍິງ 66 ຄົນ), ໃນນັ້ນອາຍຸຕໍ່າກວ່າ 18 ປີ ມີ 62 ຄົນ (ຍິງ 62 ຄົນ).

- **ສະຖານະການດຳເນີນການຄະດີອື່ນໆ:** ພວມຢູ່ໃນຂັ້ນຕອນຄົ້ນຄວ້າ ຈຳນວນ 04 ເລື່ອງ, ສົ່ງສຳນວນກັບຄືນ ໃຫ້ເຈົ້າໜ້າທີ່ຕຳຫຼວດ ຈຳນວນ 07 ເລື່ອງ, ຊຸດມ້ຽນຄະດີ 04 ເລື່ອງ ແລະ ລໍຖ້າແຈ້ງຄຳສັ່ງຟ້ອງ 03 ເລື່ອງ.

**1.3.3 ການຈັດຕັ້ງປະຕິບັດຂອງສານປະຊາຊົນສູງສຸດ:**

- **ສະຫຼຸບຜົນການຕັດສິນໃນປີ 2025:** ໄດ້ສຳເລັດການຕັດສິນຄະດີຄ້າມະນຸດທັງໝົດ ຈຳນວນ 46 ເລື່ອງ, ຊຶ່ງ ມີຈຳເລີຍ ຈຳນວນ 68 ຄົນ (ຍິງ 43 ຄົນ); ໃນນັ້ນມີຊາວຕ່າງປະເທດ ຈຳນວນ 21 ຄົນ. ມີຜູ້ຖືກເຄາະຮ້າຍ ຈຳນວນ 111 ຄົນ, ຊຶ່ງອາຍຸຕໍ່າກ່ວາ 18 ປີ ມີຈຳນວນ 47 ຄົນ (ຍິງ 47 ຄົນ). ໂທດຕັດອິດສະລະພາບສູງສຸດ ຕະຫຼອດຊີວິດ, ປັບໃໝສູງສຸດແມ່ນ ຈຳນວນ 230.000.000 ລ້ານກີບ. ປັດຈຸບັນ ຄະດີຍັງຄ້າງ ຈຳນວນ 08 ເລື່ອງ.

**1.4 ດ້ານການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ**

**1.4.1 ການຈັດຕັ້ງປະຕິບັດຢູ່ຂັ້ນສູນກາງ:** ໄດ້ສະໜອງການຊ່ວຍເຫຼືອອັນຈຳເປັນ 5 ດ້ານ ແກ່ຜູ້ຖືກເຄາະຮ້າຍ ຄື: ສະຖານທີ່ພັກເຊົາທີ່ປອດໄພຊົ່ວຄາວ, ການຊ່ວຍເຫຼືອດ້ານກົດໝາຍ, ດ້ານການແພດ, ການສຶກສາ-ຝຶກອົບຮົມວິຊາ ຊີບ ແລະ ການສົ່ງກັບຄືນສູ່ຄອບຄົວ-ສັງຄົມ. ຊຶ່ງມີລາຍລະອຽດຕົວເລກການຈັດຕັ້ງປະຕິບັດ (ນັບແຕ່ເດືອນມັງກອນ ຫາ ທັນວາ 2025) ດັ່ງນີ້:

- **ວຽກງານສະໜອງບ່ອນພັກເຊົາ ແລະ ບຳບັດຟື້ນຟູ:** ມີຜູ້ຖືກເຄາະຮ້າຍ ແລະ ກຸ່ມສ່ຽງ ເຂົ້າມາບຳບັດຟື້ນຟູຢູ່ ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ລວມທັງໝົດ 158 ຄົນ (ຍິງ 118 ຄົນ). ໃນນີ້, ເປັນຜູ້ຖືກ ເຄາະຮ້າຍຈາກການຄ້າມະນຸດ 152 ຄົນ (ຍິງ 112 ຄົນ), ອາຍຸຕໍ່າກວ່າ 18 ປີ 108 ຄົນ (ຍິງ 94 ຄົນ) ແລະ ເປັນກຸ່ມສ່ຽງ 06 ຄົນ (ຍິງທັງໝົດ). ມີຜູ້ຖືກເຄາະຮ້າຍຊາວຕ່າງປະເທດ (ສັນຊາດໄທ) 01 ຄົນ ເປັນຍິງ. ປັດຈຸບັນ (ທ້າຍປີ), ມີຜູ້ຖືກເຄາະຮ້າຍພັກເຊົາຢູ່ໃນສູນ ຈຳນວນ 02 ຄົນ ເປັນເດັກນ້ອຍ (ຍິງ 01 ຄົນ).

- **ວຽກງານຮັບ-ສົ່ງຄືນຜູ້ຖືກເຄາະຮ້າຍ:** ໄດ້ຮັບຜູ້ຖືກເຄາະຮ້າຍພົນລະເມືອງລາວ ທີ່ສົ່ງກັບມາຈາກຕ່າງປະເທດ ຈຳນວນ 69 ຄົນ (ຍິງ 41 ຄົນ, ຊາຍ 28 ຄົນ) ຄື: ຈາກມຽນມາ 31 ຄົນ (ຍິງ 05 ຄົນ), ໄທ 19 ຄົນ (ຍິງ 17 ຄົນ), ຈີນ 17 ຄົນ (ຍິງໝົດ) ແລະ ມາເລເຊຍ 02 ຄົນ (ຍິງໝົດ). ສຳລັບຜູ້ຖືກເຄາະຮ້າຍພາຍໃນປະເທດ ມີ 89 ຄົນ (ຍິງ 77 ຄົນ).
    - ໄດ້ນຳສົ່ງຜູ້ຖືກເຄາະຮ້າຍ ແລະ ກຸ່ມສ່ຽງ ກັບຄືນສູ່ຄອບຄົວ ແລະ ສັງຄົມ ຈຳນວນ 154 ຄົນ (ຍິງ 115 ຄົນ), ໃນນີ້ເປັນກຸ່ມສ່ຽງ 06 ຄົນ (ຍິງໝົດ). ພ້ອມທັງປະເມີນຄອບຄົວຜູ້ຖືກເຄາະຮ້າຍກ່ອນນຳສົ່ງ 135 ເທື່ອຄົນ ແລະ ຕິດຕາມພາຍຫຼັງການສົ່ງຄືນ ຈຳນວນ 151 ຄົນ (ຍິງ 130 ຄົນ).
- **ວຽກງານການແພດ ແລະ ກວດສຸຂະພາບ:** ໄດ້ນຳພາຜູ້ຖືກເຄາະຮ້າຍໄປກວດສຸຂະພາບ 73 ຄັ້ງ, ກວມເອົາ 220 ເທື່ອຄົນ (ຍິງ 214 ເທື່ອຄົນ); ປະຖົມພະຍາບານເບື້ອງຕົ້ນ 180 ຄົນ (ຍິງ 162 ເທື່ອຄົນ). ມີຜູ້ເຂົ້າມາກວດກໍລະນີຄວາມຮຸນແຮງທາງເພດ 51 ຄົນ (ຍິງທັງໝົດ), ຄວາມຮຸນແຮງທາງຮ່າງກາຍ 18 ຄົນ (ຍິງ 14 ຄົນ) ແລະ ເດັກນ້ອຍຖືກປະລະ 01 ຄົນ (ຊາຍ). ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ມາກວດມີ 141 ຄົນ (ຍິງ 130 ຄົນ), ໄດ້ຮັບການປິ່ນປົວຢູ່ໂຮງໝໍສູນກາງ (ໂຮງໝໍແມ່ ແລະ ເດັກ, ໂຮງໝໍມິດຕະພາບ, ໂຮງໝໍເດັກ) ລວມທັງໝົດ 136 ຄົນ (ຍິງ 125 ຄົນ).
- **ວຽກງານໃຫ້ຄຳປຶກສາ ແລະ ຝຶກອົບຮົມວິຊາຊີບ:** ໄດ້ຈັດຝຶກອົບຮົມວິຊາຊີບໄລຍະສັ້ນ (ການປຸງແຕ່ງອາຫານ ແລະ ເຄື່ອງດື່ມ) ພາຍໃນສູນ ຈຳນວນ 35 ຄັ້ງ, ມີຜູ້ເຂົ້າຮ່ວມ 132 ຄົນ (ຍິງທັງໝົດ). ບໍລິການໃຫ້ຄຳປຶກສາບັນຫາການຄ້າມະນຸດ 35 ເລື່ອງ ກວມເອົາ 35 ຄົນ (ຍິງ 32 ຄົນ), ລວມການໃຫ້ຄຳປຶກສາທັງໝົດ 95 ຄັ້ງ (ເຊິ່ງໜ້າ 16 ຄັ້ງ, ສາຍດ່ວນມືຖື 21 ຄັ້ງ, ສາຍດ່ວນ 58 ຄັ້ງ).
- **ວຽກງານການປະສານງານລະຫວ່າງປະເທດ ແລະ ການແກ້ໄຂບັນຫາແມ່ຖືພາແທນ (ອຸ້ມບຸນ):** - ປະສານງານຊ່ວຍເຫລືອພົນລະເມືອງລາວທີ່ເປັນກຸ່ມສ່ຽງ ແລະ ຖືກເຄາະຮ້າຍຢູ່ຕ່າງປະເທດ ລວມມີ: ມຽນມາ 48 ຄົນ, ກຳປູເຈຍ 18 ຄົນ, ຈີນ 14 ຄົນ, ໄທ 12 ຄົນ, ມາເລເຊຍ 02 ຄົນ, ອິນເດຍ 01 ຄົນ ແລະ ອາຣັບເອມິເຣດ 01 ຄົນ.
    - ໃຫ້ການເບິ່ງແຍງແມ່ຍິງທີ່ຮັບຈ້າງຖືພາແທນ (ອຸ້ມບຸນ) ຈຳນວນ 26 ຄົນ (ຍິງໝົດ, ອາຍຸຕ່ຳກວ່າ 18 ປີ 02 ຄົນ). ໃນນີ້ເປັນສັນຊາດລາວ 21 ຄົນ, ກຳປູເຈຍ 02 ຄົນ, ມຽນມາ 02 ຄົນ ແລະ ຫວຽດນາມ 01 ຄົນ. (ປັດຈຸບັນຮອດວັນທີ 07 ມັງກອນ 2026 ຍັງພັກເຊົາຢູ່ສູນ 02 ຄົນ).
    - ສຳເລັດການມອບເດັກທີ່ເກີດຈາກການຖືພາແທນໃຫ້ຄອບຄົວຮັບຮອງເປັນລູກລ້ຽງ 16 ຄົນ (ເດັກຍິງ 05 ຄົນ). ນຳສົ່ງແມ່ຍິງຖືພາແທນຊາວຕ່າງປະເທດ ກັບຄືນໃຫ້ກົມຕຳຫຼວດ 24 ຄົນ.
- **ວຽກງານຈັດກອງປະຊຸມປຶກສາຫາລື ແລະ ຍົກລະດັບຄວາມອາດສາມາດ:** ໄດ້ຈັດກອງປະຊຸມທີ່ສຳຄັນຕ່າງໆເຊັ່ນ: ກອງປະຊຸມດ້ານການແພດ, ການພິຈາລະນາລູກລ້ຽງ, ການແກ້ໄຂບັນຫາການຖືພາແທນ ແລະ ການແຕ່ງດອງແອບແຝງ, ກອງປະຊຸມຄຸ້ມຄອງກໍລະນີ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ ລວມຫຼາຍກວ່າ 10 ຄັ້ງ. *ພ້ອມທັງຈັດຝຶກອົບຮົມວຽກງານຈິດຕະສັງຄົມໃຫ້ 07 ແຂວງເປົ້າໝາຍ (ຜູ້ເຂົ້າຮ່ວມ 27 ຄົນ) ແລະ* ຕ້ອນຮັບຄະນະທັດສະນະສຶກສາ 13 ຄັ້ງ (155 ຄົນ).

**1.4.2 ການຈັດຕັ້ງປະຕິບັດຢູ່ເຂດເສດຖະກິດພິເສດສາມລ່ຽມຄໍາ (ແຂວງບໍ່ແກ້ວ):** ໃນໄລຍະ 01 ປີຜ່ານມາ, ໄດ້ໃຫ້ການຊ່ວຍເຫຼືອ ແລະ ສໍາພາດກຸ່ມສ່ຽງ/ຜູ້ຖືກສົງໃສວ່າຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທັງໝົດ 1,043 ຄົນ (ຍິງ 102 ຄົນ). ໃນນີ້, ເປັນພົນລະເມືອງລາວ 06 ຄົນ (ຍິງ 04 ຄົນ) ແລະ ຊາວຕ່າງປະເທດ 1,037 ຄົນ (ຍິງ 98 ຄົນ) ຊຶ່ງປະກອບມີ 13 ສັນຊາດ ຄື:

- ອິນເດຍ 833 ຄົນ (ຍິງ 27 ຄົນ), ຟີລິບປິນ 83 ຄົນ (ຍິງ 54 ຄົນ), ມາເລເຊຍ 11 ຄົນ (ຍິງ 02 ຄົນ).
- ອິນໂດເນເຊຍ 43 ຄົນ (ຍິງ 04 ຄົນ), ຈີນ 03 ຄົນ, ປາກິດສະຖານ 25 ຄົນ (ຍິງ 05 ຄົນ).
- ເອທີໂອເປຍ 25 ຄົນ (ຍິງ 06 ຄົນ), ອາວານດາ (Rwanda) 05 ຄົນ (ຍິງ 02 ຄົນ), ສີລັງກາ 02 ຄົນ.
- ທາຈິກິສະຖານ 01 ຄົນ, ອູການດາ 02 ຄົນ (ຍິງ 02 ຄົນ), ຕວກກີ 01 ຄົນ ແລະ ບັງກະລາເທດ 05 ຄົນ.

**1.4.3 ການຈັດຕັ້ງປະຕິບັດຢູ່ຂັ້ນທ້ອງຖິ່ນ:**

- **ແຂວງຫຼວງນໍ້າທາ:** ສໍາເລັດການຝຶກອົບຮົມວິຊາຊີບຊ່າງຕັດຫຍິບ, ຕັດຜົມ ແລະ ສ້ອມແປງລົດຈັກ ໃຫ້ໄວໜຸ່ມຢູ່ເມືອງສິງ ແລະ ເມືອງລອງ 17 ຄົນ (ຍິງ 08 ຄົນ). ສູນຮັບຕ້ອນຊົ່ວຄາວພາກເໜືອ ໄດ້ຮັບເອົາແມ່ຍິງ ແລະ ກຸ່ມສ່ຽງເຂົ້າພັກເຊົາ 39 ຄົນ (ຍິງ 25 ຄົນ), ໃນນີ້ມີແມ່ອຸ້ມບຸນ 21 ຄົນ (ສັນຊາດໄທ 01 ຄົນ, ໂມຊໍາບິກ 16 ຄົນ), ໄດ້ຈັດສົ່ງໃຫ້ສູນຄໍາປຶກສາສູນກາງ 23 ຄົນ ແລະ ສົ່ງໃຫ້ເຈົ້າໜ້າທີ່ຕໍາຫຼວດ 16 ຄົນ. ນອກນີ້, ເຈົ້າໜ້າທີ່ຕໍາຫຼວດແຂວງໄດ້ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ 128 ຄັ້ງ ກວມເອົາ 256 ຄົນ (ຍິງ 204 ຄົນ) ແລະ ກຸ່ມສ່ຽງ 03 ຄັ້ງ ມີ 06 ຄົນ (ຍິງ 04 ຄົນ) ເພື່ອສົ່ງກັບຄືນສູ່ຄອບຄົວ.
- **ແຂວງໄຊສົມບູນ:** ສໍາເລັດການຈັດຝຶກອົບຮົມປຸງແຕ່ງອາຫານໄລຍະສັ້ນ ໃຫ້ກຸ່ມແມ່ຍິງຜູ້ດ້ອຍໂອກາດ ແລະ ຜູ້ຖືກເຄາະຮ້າຍ ຈໍານວນ 01 ຊຸດ ມີຜູ້ເຂົ້າຮ່ວມ 16 ຄົນ (ຍິງທັງໝົດ).
- **ແຂວງເຊກອງ:** ໄດ້ຊ່ວຍເຫຼືອເດັກຊາຍທີ່ຖືກກະທໍາຄວາມຮຸນແຮງໃນຄອບຄົວ 01 ຄົນ. ໃຫ້ຄໍາປຶກສາກ່ຽວກັບການຈົດທະບຽນເອົາເດັກຕ່າງປະເທດມາເປັນລູກລ້ຽງ 10 ຄັ້ງ (ຍິງ 05 ຄົນ).
- **ວຽກງານໃຫ້ຄໍາປຶກສາ ແລະ ສາຍດ່ວນ:** ໃຫ້ຂໍ້ມູນຂ່າວສານກ່ຽວກັບການອອກແຮງງານປອດໄພ ແລະ ຕ້ານການຄ້າມະນຸດຜ່ານສາຍດ່ວນ (1512 ແຂວງບໍ່ແກ້ວ ແລະ 1362 ແຂວງສະຫວັນນະເຂດ) ຈໍານວນ 191 ຄັ້ງ, ກວມເອົາ 30 ເລື່ອງ (ຍິງ 28 ຄົນ). ໃຫ້ຄໍາປຶກສາທົ່ວໄປ 27 ຄົນ (ຍິງ 26 ຄົນ) ຜ່ານການພົບເຊິ່ງໜ້າ 74 ຄັ້ງ ແລະ ທາງໂທລະສັບ 125 ຄັ້ງ.
- **ວຽກງານສັງຄົມສົງເຄາະ:** ລົງປະເມີນເກັບກໍາຂໍ້ມູນຄອບຄົວຜູ້ຖືກເຄາະຮ້າຍກ່ອນນໍາສົ່ງກັບຄືນ ຈໍານວນ 12 ຄົນ (ຍິງ 09 ຄົນ). ພ້ອມທັງປັບປຸງຕາໜ່າງໃຫ້ຄໍາປຶກສາ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງ-ເດັກນ້ອຍ ໄດ້ໃນ 34 ບ້ານ, ຊຶ່ງມີຄະນະກໍາມະການ 160 ຄົນ (ຍິງ 51 ຄົນ).

**1.5 ດ້ານການພົວພັນຮ່ວມມືກັບຕ່າງປະເທດ**

**1.5.1 ການຮ່ວມມືສອງຝ່າຍ (Bilateral Cooperation)**

**1.5.1.1 ການຮ່ວມມືລະຫວ່າງ ສປປ ລາວ - ຣາຊະອານາຈັກໄທ:** ຂັ້ນສູນກາງ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຮ່ວມມືສອງຝ່າຍຢ່າງໃກ້ຊິດ ຊຶ່ງມີຜົນສໍາເລັດດັ່ງນີ້:

- **ດ້ານກອງປະຊຸມ ແລະ ການສ້າງກົນໄກຮ່ວມມື:** ເປັນເຈົ້າພາບຈັດກອງປະຊຸມການບໍລິຫານກໍລະນີຄຸ້ມຄອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຄັ້ງທີ 4 (CMM4) ໃນລະຫວ່າງວັນທີ 10-14 ມີນາ 2025 ທີ່ ນະຄອນຫຼວງວຽງຈັນ (ໂຮງແຮມລາວພຣາຊາ), ມີຜູ້ເຂົ້າຮ່ວມ 61 ຄົນ. ສໍາເລັດການຈັດກອງປະຊຸມປຶກສາຫາລື ກ່ຽວກັບການນໍາໃຊ້ເອກະສານທາງດ້ານກົດໝາຍ ໃນຄະດີການຄ້າມະນຸດ ໂດຍສະເພາະການມອບສິດເປັນຜູ້ຕາງໜ້າຮັບຄ່າເສຍຫາຍທາງແພ່ງ ໃນວັນທີ 02 ມິຖຸນາ 2025 ທີ່ ນະຄອນຫຼວງວຽງຈັນ (ຜູ້ເຂົ້າຮ່ວມ 14 ຄົນ, ຍິງ 06 ຄົນ) ແລະ ກອງປະຊຸມຂັ້ນຕອນການສົ່ງໜັງສືມອບສິດ ໃຫ້ແກ່ສະຖານເອກອັກຄະຣັດຖະທູດ ແຫ່ງ ສປປ ລາວ ປະຈໍາປະເທດໄທ ໃນວັນດຽວກັນ (ຜູ້ເຂົ້າຮ່ວມ 15 ຄົນ, ຍິງ 09 ຄົນ). ນອກຈາກນີ້, ຍັງໄດ້ເຂົ້າຮ່ວມກອງປະຊຸມພັດທະນາຄວາມຮ່ວມມືດ້ານການປົກປ້ອງ ແລະ ສົ່ງຕໍ່ເດັກຜູ້ຖືກເຄາະຮ້າຍ ພາກເໜືອຂອງໄທ ຮ່ວມກັບແຂວງຫຼວງນໍ້າທາ ແລະ ບໍ່ແກ້ວ ໃນວັນທີ 16-17 ທັນວາ 2025 ທີ່ແຂວງຊຽງໃໝ່.
- **ດ້ານການເຄື່ອນໄຫວຊ່ວຍເຫຼືອຕົວຈິງ ແລະ ຝຶກອົບຮົມ:** ລົງເຄື່ອນໄຫວຢ້ຽມຢາມ ແລະ ສໍາພາດຜູ້ຖືກເຄາະຮ້າຍ ຈໍານວນ 14 ຄົນ ຢູ່ສູນຊ່ວຍເຫຼືອປະເທດໄທ (Case Worker Visit) ໃນວັນທີ 10-14 ກຸມພາ 2025. ໄດ້ນໍາສົ່ງຜູ້ຖືກເຄາະຮ້າຍຊາວໄທ (ຍິງ 01 ຄົນ) ກັບຄືນປະເທດ ໃນວັນທີ 07 ພະຈິກ 2025 ທີ່ ຂົວມິດຕະພາບລາວ-ໄທ ແຫ່ງທີ I. ພ້ອມນັ້ນ, ໄດ້ເຂົ້າຮ່ວມຝຶກອົບຮົມການເປັນຜູ້ນໍາທີ່ດີເລີດ ໃນການຕ້ານການຄ້າມະນຸດ ໃນອາຊຽນ ພາຍໃຕ້ແຜນງານອົດສະຕຣາລີ (ASEAN-ACT) ໃນວັນທີ 13-17 ມັງກອນ 2025 ທີ່ ບາງກອກ ແລະ ເຂົ້າຮ່ວມການຝຶກອົບຮົມພາກປະຕິບັດ ກ່ຽວກັບການປຽວຢາຈິດໃຈຜູ້ຖືກເຄາະຮ້າຍ ແລະ ກຸ່ມສ່ຽງ ຮ່ວມກັບ 3 ປະເທດ (ໄທ, ມຽນມາ, ລາວ) ທີ່ປະເທດໄທ.

**1.5.1.2 ການຮ່ວມມືລະຫວ່າງ ສປປ ລາວ - ສສ ຫວຽດນາມ:**

- ເຂົ້າຮ່ວມກອງປະຊຸມສໍາມະນາ (Workshop) ກ່ຽວກັບຂະບວນການຄອມມິດ (COMMIT) ໃນລະຫວ່າງວັນທີ 27-29 ຕຸລາ 2025 ທີ່ ແຂວງກວາງນິງ.
- ເຂົ້າຮ່ວມຝຶກອົບຮົມວຽກງານຕ້ານການຄ້າມະນຸດ ໃນລະຫວ່າງວັນທີ 16-27 ມິຖຸນາ 2025 ທີ່ ແຂວງກວ່າງບິ່ງ.
- ເຂົ້າຮ່ວມກອງປະຊຸມຄະນະປະຕິບັດງານພາກພື້ນ ແລະ ກອງປະຊຸມຂັ້ນລັດຖະມົນຕີ ຂອງຂະບວນການຄອມມິດ ຄັ້ງທີ 06 ໃນລະຫວ່າງວັນທີ 17-21 ພະຈິກ 2025 ທີ່ ສສ ຫວຽດນາມ.

**1.5.1.3 ການຮ່ວມມືລະຫວ່າງ ສປປ ລາວ - ສປ ຈີນ:**

- ສໍາເລັດການລົງນາມ ບົດບັນທຶກຄວາມເຂົ້າໃຈ (MOU) ວ່າດ້ວຍການຮ່ວມມືດ້ານແຮງງານ ແລະ ປະກັນສັງຄົມ ຮ່ວມກັບນະຄອນຄຸນໝິງ ໃນວັນທີ 12 ມິຖຸນາ 2025 ແລະ ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືດ້ານແຮງງານຂ້າມຊາຍແດນ ຮ່ວມກັບເມືອງເມັງຫຼ້າ (ແຂວງຢຸນນານ) ໃນວັນທີ 27 ມິຖຸນາ 2025.

- ສຳເລັດການລົງນາມ ຂໍ້ຕົກລົງຮ່ວມກັບສະຖາບັນພັດທະນາສີມືແຮງງານ ແລະ ບໍລິສັດ ບີເອັນ ພັດທະນາ ຈຳກັດ ກ່ຽວກັບການທົດລອງຈັດຕັ້ງປະຕິບັດ MOU ຂອງນະຄອນຄຸນໝິງ ໃນວັນທີ 03 ທັນວາ 2025 ທີ່ ນະຄອນຫຼວງວຽງຈັນ (ຜູ້ເຂົ້າຮ່ວມ 22 ຄົນ, ຍິງ 10 ຄົນ).
- ເຂົ້າຮ່ວມຝຶກອົບຮົມວຽກງານຕ້ານການຄ້າມະນຸດ ທີ່ ສປ ຈີນ ໃນລະຫວ່າງວັນທີ 24-30 ກັນຍາ 2025 (ຜູ້ເຂົ້າຮ່ວມ 30 ຄົນ, ຍິງ 03 ຄົນ).

**1.5.1.4 ການຮ່ວມມືລະຫວ່າງ ສປປ ລາວ - ສາທາລະນະລັດ ເກົາຫຼີ:**

- ສຳເລັດການສ້າງສື່ໂຄສະນາ (ວິດີໂອ) ແນະນຳກ່ຽວກັບຂັ້ນຕອນ ແລະ ເງື່ອນໄຂການໄປເຮັດວຽກຢູ່ ສ.ເກົາຫຼີ ຕາມລະດູການ ເພື່ອເຜີຍແຜ່ໃຫ້ປະຊາຊົນເຂົ້າໃຈຢ່າງເລິກເຊິ່ງ.
- ສຳເລັດການຈັດເຜີຍແຜ່ ແລະ ເປີດຮັບລົງທະບຽນສອບເສັງເຂົ້າໃນລະບົບ EPS ຄັ້ງທີ 32 ໃນລະຫວ່າງວັນທີ 12-13 ມີນາ 2025 ທີ່ ແຂວງຊຽງຂວາງ (ມີຜູ້ເຂົ້າຮ່ວມ 183 ຄົນ, ຍິງ 48 ຄົນ).
- ສຳເລັດກອງປະຊຸມປຶກສາຫາລືວຽກງານການຈັດສົ່ງແຮງງານລາວໄປເຮັດວຽກຕາມລະດູການ ຮ່ວມກັບບັນດາບໍລິສັດຈັດຫາງານ ໃນວັນທີ 03 ຕຸລາ 2025 ທີ່ ນະຄອນຫຼວງວຽງຈັນ (ຜູ້ເຂົ້າຮ່ວມ 24 ຄົນ, ຍິງ 11 ຄົນ).

**1.6 ການຮ່ວມມືໃນກອບຂອງອາຊຽນ ແລະ ພາກພື້ນ**

- **ກອງປະຊຸມລະດັບພາກພື້ນຢູ່ພາຍໃນປະເທດ:** ເປັນເຈົ້າພາບຈັດກອງປະຊຸມ ການເຄື່ອນຍ້າຍແຮງງານໃນປະເທດພາກພື້ນແມ່ນ້ຳຂອງ (GMS) ຄັ້ງທີ 03 ໃນວັນທີ 29 ພຶດສະພາ 2025 ທີ່ ແຂວງຫຼວງພະບາງ (ມີຜູ້ເຂົ້າຮ່ວມຈາກ ກຳປູເຈຍ, ມຽນມາ, ໄທ, ຫວຽດນາມ, ສປ ຈີນ, ສປປ ລາວ ແລະ ຄູ່ຮ່ວມພັດທະນາ ຈຳນວນ 59 ຄົນ, ຍິງ 31 ຄົນ). ສຳເລັດກອງປະຊຸມສຳມະນາຂອງຄະນະກຳມະທິການລະຫວ່າງລັດຖະບານອາຊຽນກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາສິດທິມະນຸດ ໃນວັນທີ 06-07 ມີນາ 2025 ທີ່ ນະຄອນຫຼວງວຽງຈັນ ແລະ ກອງປະຊຸມກະກຽມໃຫ້ແກ່ຄະນະເຂົ້າຮ່ວມເວທີອາຊຽນ ວ່າດ້ວຍແຮງງານເຄື່ອນຍ້າຍ ໃນວັນທີ 29 ສິງຫາ 2025 (ຜູ້ເຂົ້າຮ່ວມ 37 ຄົນ, ຍິງ 21 ຄົນ).
- **ການເຂົ້າຮ່ວມເຄື່ອນໄຫວຢູ່ຕ່າງປະເທດ:** ເຂົ້າຮ່ວມກອງປະຊຸມເວທີອາຊຽນ ກ່ຽວກັບແຮງງານເຄື່ອນຍ້າຍ ຄັ້ງທີ 18 ໃນວັນທີ 09-10 ກັນຍາ 2025 ທີ່ ປະເທດມາເລເຊຍ. ເຂົ້າຮ່ວມກອງປະຊຸມຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນວຽກຂ້າມຂະແໜງການຂອງອາຊຽນ ໄລຍະສອງ (Bohol II) ວ່າດ້ວຍການຕ້ານການຄ້າມະນຸດ ຄັ້ງທີ 01 ໃນວັນທີ 23-24 ກໍລະກົດ 2025 ທີ່ ປະເທດມາເລເຊຍ. ນອກຈາກນັ້ນ, ຍັງໄດ້ເຂົ້າຮ່ວມການຝຶກອົບຮົມການເປັນຜູ້ນຳທີ່ດີເລີດ ໃນການຕ້ານການຄ້າມະນຸດໃນອາຊຽນ ພາຍໃຕ້ແຜນງານອົດສະຕຣາລີ (ASEAN-ACT) ໃນວັນທີ 01-04 ທັນວາ 2025 ທີ່ ປະເທດຟີລິບປິນ.

**1.6.1 ການຮ່ວມມືກັບອົງການຈັດຕັ້ງສາກົນ**

**1.6.1.2 ການຈັດຕັ້ງປະຕິບັດຢູ່ຂັ້ນສູນກາງ:** ໄດ້ເອົາໃຈໃສ່ພົວພັນຮ່ວມມືກັບບັນດາອົງການເຄືອຂ່າຍສະຫະປະຊາຊາດ, ອົງການຈັດຕັ້ງສາກົນ ແລະ ສະມາຄົມຕ່າງໆ ຢ່າງເປັນປົກກະຕິ ຊຶ່ງມີຜົນສຳເລັດພົ້ນເດັ່ນ ດັ່ງນີ້:

- **ການຮ່ວມມືກັບອົງການສະຫະປະຊາຊາດ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ (UNODC):**
    - ສຳເລັດກອງປະຊຸມປຶກສາຫາລືກ່ຽວກັບ ຕົວຊີ້ວັດການຄ້າມະນຸດ (ຮູບແບບການບັງຄັບກະທຳຜິດທາງອາຍາ ແລະ ການຄ້າອະໄວຍະວະ) ໃນວັນທີ 21 ສິງຫາ 2025 ທີ່ ນະຄອນຫຼວງວຽງຈັນ (ຜູ້ເຂົ້າຮ່ວມ 41 ຄົນ, ຍິງ 22 ຄົນ).
    - ຈັດຝຶກອົບຮົມວຽກງານຕ້ານການຄ້າມະນຸດ ໃຫ້ພະນັກງານການທູດ ທີ່ຈະໄປປະຈຳການຢູ່ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຕ່າງປະເທດ ໃນວັນທີ 16-17 ທີ່ແຂວງວຽງຈັນ (ຜູ້ເຂົ້າຮ່ວມ 30 ຄົນ, ຍິງ 14 ຄົນ).
- **ການຮ່ວມມືກັບອົງການສະຫະປະຊາຊາດ ສຳລັບເດັກ (UNICEF) ແລະ ກອງທຶນສຳລັບປະຊາກອນ (UNFPA):**
    - **UNICEF:** ຈັດກອງປະຊຸມໜ່ວຍງານວິຊາການຕ້ານການຄ້າມະນຸດ ຄັ້ງທີ 01/2025 ໃນວັນທີ 26 ມິຖຸນາ 2025 (ຜູ້ເຂົ້າຮ່ວມ 60 ທ່ານ, ຍິງ 20 ທ່ານ) ແລະ ຮ່ວມປະເມີນຜົນງານການຮ່ວມມືປະຈຳປີ 2022-2026.
    - **UNFPA:** ເຂົ້າຮ່ວມກອງປະຊຸມປຶກສາຫາລືແຜນງານການຮ່ວມມື ທີ່ຫ້ອງການ UN (09 ພຶດສະພາ 2025) ແລະ ກອງປະຊຸມທົບທວນການຈັດຕັ້ງປະຕິບັດໂຄງການ ປະຈຳປີ 2025 ທີ່ແຂວງຫຼວງພະບາງ (25-27 ທັນວາ 2025).
- **ການຮ່ວມມືກັບອົງການຈັດຕັ້ງສາກົນ ເພື່ອການເຄື່ອນຍ້າຍຖິ່ນຖານ (IOM) ແລະ ອົງການແຮງງານສາກົນ (ILO):**
    - **IOM:** ສຳເລັດກອງປະຊຸມເຜີຍແຜ່ຄູ່ມື ແລະ ຝຶກອົບຮົມການແນະນຳຄວາມພ້ອມໃຫ້ແຮງງານກ່ອນໄປຕ່າງປະເທດ ພາຍໃຕ້ໂຄງການ PROMISE II ຈຳນວນ 02 ຄັ້ງ (ຜູ້ເຂົ້າຮ່ວມ 127 ຄົນ, ຍິງ 55 ຄົນ) ແລະ ເຂົ້າຮ່ວມກອງປະຊຸມປິດໂຄງການດັ່ງກ່າວ ໃນວັນທີ 08 ທັນວາ 2025 (ຜູ້ເຂົ້າຮ່ວມ 16 ຄົນ; ຍິງ 09 ຄົນ).
    - **ILO:** ສຳເລັດກອງປະຊຸມຄະນະຊີ້ນຳໂຄງການ ຮ່ວມມືສາມຝ່າຍໃນອາຊຽນ (Triangle in ASEAN) ໃນວັນທີ 06 ພຶດສະພາ 2025 (ຜູ້ເຂົ້າຮ່ວມ 47 ຄົນ, ຍິງ 21 ຄົນ).
- **ການຮ່ວມມືກັບອົງການບ້ານຈຸດສຸມສາກົນ (VFI):**
    - **ດ້ານນິຕິກຳ ແລະ ການວາງແຜນ:** ສຳເລັດການລົງນາມ ບົດບັນທຶກຄວາມເຂົ້າໃຈ (MOU) ໂຄງການປົກປ້ອງ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ຜູ້ຖືກເຄາະຮ້າຍ ແລະ ຜູ້ທີ່ຕົກຢູ່ໃນຄວາມສ່ຽງທີ່ຈະຖືກຄ້າມະນຸດ ໄລຍະທີ IV (ຜູ້ເຂົ້າຮ່ວມ 55 ຄົນ, ຍິງ 18 ຄົນ) ແລະ ຈັດກອງປະຊຸມວາງແຜນກິດຈະກຳ ຮ່ວມກັບ 05 ແຂວງເປົ້າໝາຍ (ຫຼວງພະບາງ, ໄຊຍະບູລີ, ສາລະວັນ, ຈຳປາສັກ, ນະຄອນຫຼວງວຽງຈັນ).
    - **ດ້ານການເຜີຍແຜ່ ແລະ ສ້າງຄວາມອາດສາມາດ:** ຈັດກອງປະຊຸມເຜີຍແຜ່ຂໍ້ມູນການເຄື່ອນຍ້າຍປອດໄພ ໃຫ້ 05 ແຂວງເປົ້າໝາຍ (ຜູ້ເຂົ້າຮ່ວມ 482 ຄົນ, ຍິງ 186 ຄົນ). ສ້າງຄວາມອາດສາມາດ

ໃຫ້ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກຂັ້ນເມືອງ ແລະ ຕາໜ່າງປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກຂັ້ນບ້ານ (ຜູ້ເຂົ້າຮ່ວມ 743 ຄົນ, ຍິງ 243 ຄົນ). ຈັດກອງປະຊຸມຖອດຖອນບົດຮຽນຮ່ວມກັບເຈົ້າໜ້າທີ່ດ່ານສາກົນວັງເຕົ່າ (ຜູ້ເຂົ້າຮ່ວມ 12 ຄົນ, ຍິງ 03 ຄົນ) ແລະ ຝຶກອົບຮົມທັກສະການແປພາສາໃນການສຳພາດຜູ້ຖືກເຄາະຮ້າຍ (ຜູ້ເຂົ້າຮ່ວມ 22 ຄົນ, ຍິງ 11 ຄົນ).

- **ດ້ານການຊ່ວຍເຫຼືອຕົວຈິງ:** ຈັດງານວັນສາກົນຕ້ານການຄ້າມະນຸດ (05 ສິງຫາ 2025) ແລະ ອອກສື່ໂຄສະນາ. ໄດ້ນຳສົ່ງແມ່ຍິງກັບຄືນພູມລຳເນົາ ທີ່ເມືອງສັງທອງ ແລະ ເມືອງແມດ ພາຍຫຼັງສຳເລັດການຝຶກວິຊາຊີບ 02 ຄົນ (ຍິງໝົດ) ພ້ອມມອບອຸປະກອນເສີມສວຍມູນຄ່າ 5.377.000 ກີບ.

- **ການຮ່ວມມືກັບສະມາຄົມແສງສະຫວ່າງ:**
  - ສ້າງຄວາມອາດສາມາດໃຫ້ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກຂັ້ນເມືອງ ແລະ ຕາໜ່າງປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກຂັ້ນບ້ານ (ຜູ້ເຂົ້າຮ່ວມ 251 ຄົນ, ຍິງ 78 ຄົນ) ລວມທັງເມືອງຈຳພອນ ແລະ ເມືອງຊົນນະບູລີ (ຜູ້ເຂົ້າຮ່ວມ 123 ຄົນ, ຍິງ 35 ຄົນ).
  - ສຳເລັດກອງປະຊຸມສະຫຼຸບໂຄງການຊ່ວຍເຫຼືອເດັກ ແລະ ຜູ້ດ້ອຍໂອກາດ ໄລຍະທີ V (2022-2025) ໃນວັນທີ 26 ທັນວາ 2025ຜູ້ເຂົ້າຮ່ວມ 48 ຄົນ, ຍິງ 33 ຄົນ.
  - ໃຫ້ການຊ່ວຍເຫຼືອເດັກ ແລະ ໄວໜຸ່ມດ້ອຍໂອກາດ (ມັງກອນ-ກັນຍາ 2025) ຈຳນວນ 75 ຄົນ (ຍິງ 67 ຄົນ) ປະກອບມີ: ຝຶກວິຊາຊີບຕັດຫຍິບ 24 ຄົນ, ຕ່ຳຫູກ 01 ຄົນ, ເສີມສວຍ 16 ຄົນ ແລະ ຮຽນໜັງສື 34 ຄົນ. ໃນນີ້, ເປັນກຸ່ມສ່ຽງ 31 ຄົນ, ຖືກຄວາມຮຸນແຮງ 02 ຄົນ, ຂົ່ມຂືນ 01 ຄົນ ແລະ ດ້ອຍໂອກາດ 41 ຄົນ.

**1.6.1.3 ການຈັດຕັ້ງປະຕິບັດຢູ່ຂັ້ນທ້ອງຖິ່ນ:**

- **ການຮ່ວມມືກັບສະມາຄົມແສງສະຫວ່າງ:** ໄດ້ໃຫ້ການຊ່ວຍເຫຼືອເດັກ ແລະ ກຸ່ມສ່ຽງ ຢູ່ 14 ເມືອງ ໃນແຂວງສະຫວັນນະເຂດ (ໄກສອນ, ອາດສະພອນ, ອາດສະພັງທອງ, ພະລານໄຊ, ພີນ, ເຊໂປນ, ວິລະບູລີ, ນອງ, ອຸທຸມພອນ, ໄຊບູລີ, ທ່າປາງທອງ, ຈຳພອນ, ຊົນນະບູລີ) ຈຳນວນ 162 ຄົນ (ຍິງ 158 ຄົນ). ໃນນີ້, ສະໜອງທຶນການສຶກສາ (ສາຍສາມັນ ແລະ ວິທະຍາໄລ) 62 ຄົນ, ຊ່ວຍທຶນຝຶກວິຊາຊີບໄລຍະສັ້ນ 165 ຄົນ (ເສີມຄວາມງາມ, ຕັດຫຍິບ, ຕ່ຳແຜ່ນ). ລວມມູນຄ່າການຊ່ວຍເຫຼືອທັງໝົດ 55.369.500 ກີບ. ນອກນີ້, ຍັງໄດ້ຟື້ນຟູຈິດໃຈ ແລະ ສົ່ງເສີມວິຊາຊີບກ່ອນສົ່ງຄືນສັງຄົມ 12 ຄົນ (ຍິງໝົດ) ແລະ ຈັດກອງປະຊຸມແລກປ່ຽນບົດຮຽນຢູ່ເມືອງພະລານໄຊ (ຜູ້ເຂົ້າຮ່ວມ 86 ຄົນ, ຍິງ 32 ຄົນ).
- **ການຮ່ວມມືກັບອົງການບ້ານຈຸດສຸມສາກົນ (VFI):** ລົງໂຄສະນາ ແລະ ແຈກຢາຍແຜ່ນພັບການອອກແຮງງານແບບປອດໄພ ຈຳນວນ 16 ຄັ້ງ (248 ຊຸດ), ມີຜູ້ເຂົ້າຮ່ວມ 651 ຄົນ (ຍິງ 258 ຄົນ).
- **ການຮ່ວມມືກັບບ້ານຊ່ວຍເຫຼືອເດັກເອັສໂອເອັສ (SOS) ແຂວງສະຫວັນນະເຂດ:** ໃຫ້ການຊ່ວຍເຫຼືອເບິ່ງແຍງເດັກດ້ອຍໂອກາດ ຈຳນວນ 176 ຄົນ (ຍິງ 82 ຄົນ) ເຂົ້າໃນການຄຸ້ມຄອງ. ພ້ອມທັງສະໜັບສະໜູນໄວໜຸ່ມ 15 ຄົນ (ຍິງ 08 ຄົນ) ເຂົ້າຮຽນວິຊາຊີບ ຊຶ່ງປັດຈຸບັນໄດ້ສຳເລັດການສຶກສາແລ້ວ.

## 2. ຕີລາຄາດ້ານອ່ອນຂໍ້ຄົງຄ້າງ, ສາເຫດ ແລະ ບົດຮຽນທີ່ຖອດຖອນໄດ້

**2.1 ດ້ານອ່ອນ ແລະ ຂໍ້ຄົງຄ້າງ** ຄຽງຄູ່ກັບຜົນງານ ແລະ ດ້ານດີທີ່ຍາດມາໄດ້ນັ້ນ, ໃນການຈັດຕັ້ງປະຕິບັດຕົວຈິງ ຍັງມີບາງຂໍ້ຄົງຄ້າງທີ່ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂດັ່ງນີ້:

- **ການຈັດຕັ້ງປະຕິບັດແຜນງານແຫ່ງຊາດ ແລະ ກົນໄກການຄຸ້ມຄອງ:** ການຈັດຕັ້ງປະຕິບັດແຜນງານແຫ່ງຊາດວ່າດ້ວຍການຕ້ານການມະນຸດ ໄລຍະ III (ແຕ່ປີ 2021-2025) ຢູ່ບາງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນເຂົ້າສູ່ລວງເລິກ, ເຮັດໃຫ້ມີສະພາບການຄ້າມະນຸດເກີດຂຶ້ນຫຼາຍ. ນອກຈາກນີ້, ຍັງມີປາກົດການຫຍໍ້ທໍ້ ທີ່ເຈົ້າໜ້າທີ່ຈຳນວນໜຶ່ງໄດ້ສວຍໃຊ້ຊ່ອງຫວ່າງ ໃນການແກ້ໄຂບັນຫາການຄ້າມະນຸດ ເພື່ອກະທຳຜິດ ແລະ ຖືກດຳເນີນຄະດີທາງອາຍາ.
- **ກົງຈັກການຈັດຕັ້ງ ແລະ ງົບປະມານ:** ການປະກອບກົງຈັກຄະນະກຳມະການຕ້ານການຄ້າມະນຸດ (ຄຕມຊ) ຂັ້ນແຂວງ ແລະ ເມືອງ ຈຳນວນໜຶ່ງ ຍັງບໍ່ທັນສອດຄ່ອງກັບດຳລັດ (ທີ່ກຳນົດໃຫ້ຮອງເຈົ້າແຂວງ/ຮອງເຈົ້າເມືອງ ເປັນຜູ້ຮັບຜິດຊອບ), ເຮັດໃຫ້ການແກ້ໄຂບັນຫາບໍ່ໄດ້ຮັບຜົນດີເທົ່າທີ່ຄວນ. ພ້ອມກັນນັ້ນ, ບາງແຂວງຍັງບໍ່ທັນໄດ້ຈັດສັນງົບປະມານສະໜອງໃຫ້ແກ່ວຽກງານດັ່ງກ່າວ ຕາມຄຳແນະນຳ ສະບັບເລກທີ 044/ຄຕມຊ, ລົງວັນທີ 25 ກໍລະກົດ 2018 ຈຶ່ງເຮັດໃຫ້ການເຄື່ອນໄຫວພົບຄວາມຫຍຸ້ງຍາກ.
- **ການໂຄສະນາ ແລະ ວຽກງານສະຖິຕິ:** ການໂຄສະນາເຜີຍແຜ່ ຍັງບໍ່ທັນກວ້າງຂວາງ ແລະ ເຂົ້າເຖິງກຸ່ມເປົ້າໝາຍຢ່າງທົ່ວເຖິງ; ສື່ໂຄສະນາຍັງບໍ່ທັນມີຫຼາຍຮູບຫຼາຍສີ ແລະ ການປະຕິບັດບໍ່ຕໍ່ເນື່ອງ. ການເກັບກຳຂໍ້ມູນ, ຜົນງານ ແລະ ສະຖິຕິຄະດີຄ້າມະນຸດ ຍັງມີຄວາມຊັກຊ້າ, ບໍ່ລະອຽດຊັດເຈນ ເຮັດໃຫ້ຕົວເລກຜົນງານທີ່ສະແດງອອກ ບໍ່ທັນສອດຄ່ອງກັບການເຄື່ອນໄຫວວຽກງານຕົວຈິງ.
- **ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ:** ສະຖານທີ່ບຳບັດຟື້ນຟູ ແລະ ສູນຮອງຮັບຜູ້ຖືກເຄາະຮ້າຍໃນໄລຍະຍາວ ຍັງບໍ່ທັນຮັບປະກັນທາງດ້ານຈຳນວນ ແລະ ຄຸນນະພາບ; ບາງໂຮງໝໍຍັງບໍ່ທັນມີຫ້ອງກວດສະເພາະສຳລັບຜູ້ຖືກເຄາະຮ້າຍ; ການສະໜອງການຝຶກອົບຮົມວິຊາຊີບ, ອຸປະກອນ ແລະ ພາຫະນະຮັບໃຊ້ຍັງຈຳກັດ. ບຸກຄະລາກອນທີ່ມີຄວາມຊຳນານງານຍັງບໍ່ພຽງພໍ, ຂະນະທີ່ການຕິດຕາມປະເມີນຜົນຜູ້ຖືກເຄາະຮ້າຍ (ກ່ອນ ແລະ ຫຼັງສົ່ງຄືນສູ່ຄອບຄົວ-ສັງຄົມ) ຍັງເຮັດບໍ່ທັນໄດ້ດີ ແລະ ບໍ່ຕໍ່ເນື່ອງ.
- **ວຽກງານຮ່ວມມືສາກົນ:** ການຮ່ວມມືສອງຝ່າຍ ແລະ ສາມຝ່າຍ ໃນບາງແຜນການທີ່ຕົກລົງກັນ ຍັງບໍ່ທັນສາມາດຈັດຕັ້ງປະຕິບັດໄດ້ ຍ້ອນການປັບປຸງກົງຈັກການຈັດຕັ້ງຂອງບາງປະເທດ ເຮັດໃຫ້ການປະສານງານມີຄວາມຫຍຸ້ງຍາກ. ສຳລັບການຊ່ວຍເຫຼືອລ້າຈາກຕ່າງປະເທດ ສ່ວນຫຼາຍແມ່ນເນັ້ນໜັກໃສ່ການຈັດກອງປະຊຸມ ແລະ ຝຶກອົບຮົມ, ຍັງຂາດການສະໜັບສະໜູນດ້ານການສ້າງພື້ນຖານໂຄງລ່າງ.

### 2.2 ສາເຫດທີ່ພາໃຫ້ມີດ້ານດີ ແລະ ດ້ານອ່ອນຄົງຄ້າງ

#### 2.2.1 ສາເຫດທີ່ພາໃຫ້ມີດ້ານດີ:

1. ລັດຖະບານ ໄດ້ເຫັນເຖິງຄວາມສຳຄັນ ແລະ ຄວາມຈຳເປັນ, ຊຶ່ງໄດ້ກຳນົດແນວທາງນະໂຍບາຍ, ແຜນງານແຫ່ງຊາດ, ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ພ້ອມທັງສະໜອງງົບປະມານຢ່າງເໝາະສົມເປັນແຕ່ລະໄລຍະ.

2. ຄວາມເອົາໃຈໃສ່ຊີ້ນຳ-ນຳພາຢ່າງໃກ້ຊິດ ຂອງປະທານ, ຮອງປະທານ ແລະ ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ແລະ ທ້ອງຖິ່ນ ຕະຫຼອດຮອດກອງເລຂາທຸກຂັ້ນ ໃນການຈັດຕັ້ງເຄື່ອນໄຫວຢ່າງຕັ້ງໜ້າ ແລະ ມີໝາກຜົນຕົວຈິງ.
3. ການຮ່ວມມື ແລະ ປະກອບສ່ວນຢ່າງຕັ້ງໜ້າ ຂອງປະຊາຊົນບັນດາເຜົ່າໃນສັງຄົມ ເຂົ້າໃນຂະບວນການສະກັດກັ້ນ ແລະ ຕ້ານການຄ້າມະນຸດ.
4. ການປະສານສົມທົບ ແລະ ການຮ່ວມມືຢ່າງແໜ້ນແຟ້ນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຄວາມຕໍ່ເນື່ອງ.

**2.2.2 ສາເຫດທີ່ພາໃຫ້ມີດ້ານອ່ອນຄົງຄ້າງ:**

1. ຄວາມຮັບຮູ້-ເຂົ້າໃຈ ຕໍ່ພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບໃນການຕ້ານການຄ້າມະນຸດ ຂອງພະນັກງານຈຳນວນໜຶ່ງ (ທັງສູນກາງ ແລະ ທ້ອງຖິ່ນ) ຍັງບໍ່ທັນກວ້າງຂວາງ ແລະ ເລິກເຊິ່ງເທົ່າທີ່ຄວນ.

2. ກຸ່ມອາຊະຍາກຳ ໄດ້ນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານທີ່ທັນສະໄໝ ເຂົ້າໃນການໂຄສະນາຊວນເຊື່ອ ແລະ ຕິດຕໍ່ປະສານງານ, ໂດຍມີຫົວໂປ່ໂຕການເປັນຊາວຕ່າງປະເທດທີ່ເຄື່ອນໄຫວຢູ່ຕ່າງປະເທດ (ບັນຊາເຄືອຂ່າຍໃນລາວ), ເຮັດໃຫ້ມີຄວາມຫຍຸ້ງຍາກໃນການຈັບຕົວມາດຳເນີນຄະດີ (ສ່ວນໃຫຍ່ຜູ້ທີ່ຖືກຈັບໄດ້ ແມ່ນແມ່ຍິງລາວທີ່ຖືກຊື້ຈ້າງມາກະທຳຜິດ).

3. ລະບົບການຄຸ້ມຄອງແຮງງານ ທັງແຮງງານລາວ (ພາຍໃນ ແລະ ຕ່າງປະເທດ) ແລະ ແຮງງານຕ່າງປະເທດໃນລາວ ຍັງບໍ່ທັນຮັດກຸມ ແລະ ຮັບປະກັນທາງດ້ານປະລິມານ-ຄຸນນະພາບ, ເປັນຊ່ອງຫວ່າງເຮັດໃຫ້ຜູ້ອອກແຮງງານຈຳນວນໜຶ່ງຕົກເປັນຜູ້ຖືກເຄາະຮ້າຍ.

**2.3 ບົດຮຽນທີ່ຖອດຖອນໄດ້**

1. ຄະນະກຳມະການຕ້ານການຄ້າມະນຸດ (ສູນກາງ ແລະ ທ້ອງຖິ່ນ) ຕ້ອງໄດ້ເພີ່ມທະວີການຊີ້ນຳ-ນຳພາ ຈັດຕັ້ງປະຕິບັດແຜນງານແຫ່ງຊາດ ໃຫ້ເຂົ້າສູ່ລວງເລິກ ແລະ ກວ້າງຂວາງ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນສູງສຸດ.
2. ຕ້ອງຖືເອົາວຽກງານການປ້ອງກັນ, ສະກັດກັ້ນ ຕິດພັນກັບການໂຄສະນາປຸກຈິດສຳນຶກເປັນຫຼັກ; ປຸກລະດົມທຸກພາກສ່ວນໃນສັງຄົມ (ພາກລັດ, ເອກະຊົນ, ອົງການຈັດຕັ້ງສາກົນ ແລະ ປະຊາຊົນ) ໃຫ້ເຫັນໄດ້ຄວາມສຳຄັນ ແລະ ມີສ່ວນຮ່ວມ ເພື່ອແກ້ໄຂບັນຫາໃຫ້ຫຼຸດລົງ.
3. ຕ້ອງເດັດຂາດໃນການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ຜູ້ກະທຳຜິດຢ່າງເຂັ້ມງວດ; ຄຽງຄູ່ກັບການປົກປ້ອງຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ພ້ອມທັງທວງເອົາຄ່າຊົດເຊີຍຄວາມເສຍຫາຍຢ່າງຍຸຕິທຳ.
4. ຕ້ອງສືບຕໍ່ຮັກສາຄວາມກົມກຽວ ແລະ ເປັນເອກະພາບ ໃນການປະສານສົມທົບລະຫວ່າງ ຄະນະກຳມະການ ແລະ ກອງເລຂາແຕ່ລະຂັ້ນ.
5. ເພີ່ມທະວີການພົວພັນຮ່ວມມືກັບສາກົນ ບົນພື້ນຖານສົນທິສັນຍາ, ສັນຍາ ແລະ ບົດບັນທຶກຄວາມເຂົ້າໃຈທີ່ລັດຖະບານໄດ້ອະນຸມັດ.
6. ການສ້າງພື້ນຖານໂຄງລ່າງ, ການສ້າງວຽກເຮັດງານທຳ ແລະ ການປັບປຸງຊີວິດການເປັນຢູ່ໃຫ້ແກ່ປະຊາຊົນບັນດາເຜົ່າ ແມ່ນປັດໄຈສຳຄັນພື້ນຖານ ໃນການແກ້ໄຂບັນຫາການຄ້າມະນຸດຢູ່ ສປປ ລາວ.

**ຫົວໜ້າກອງເລຂາ**

**ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ**

ກອງເລຂາ

**ພົຈວ ສາລີ ພຸດທະວົງ**